ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງສາທາລະນະສຸກ

ເລກທີ 1626/ສທ

ນະຄອນຫຼວງວຽງຈັນ, ວັນທີ 21 JUL 2023

# ຂໍ້ຕົກລົງ
# ວ່າດ້ວຍການຄຸ້ມຄອງຜະລິດຕະພັນເຄື່ອງສຳອາງ
# (ສະບັບປັບປຸງ)

- ອີງຕາມ ກົດໝາຍວ່າດ້ວຍຢາ ແລະ ຜະລິດຕະພັນການແພດ ສະບັບເລກທີ 07/ສພຊ, ລົງວັນທີ 21 ທັນວາ 2011;
- ອີງຕາມ ດຳລັດວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງກະຊວງສາທາລະນະສຸກ ສະບັບເລກທີ 570/ນຍ, ລົງວັນທີ 16 ກັນຍາ 2021;
- ອີງຕາມ ໜັງສືສະເໜີຂອງກົມອາຫານ ແລະ ຢາ, ສະບັບເລກທີ 3238/ກອຢ, ລົງວັນທີ 24 ມີນາ 2023.

## ລັດຖະມົນຕີ ຕົກລົງ:

## ໝວດທີ I
## ບົດບັນຍັດທົ່ວໄປ

### ມາດຕາ 1 ຈຸດປະສົງ (ປັບປຸງ)

ຂໍ້ຕົກລົງສະບັບນີ້ກຳນົດຫຼັກການ, ລະບຽບການ, ວິທີການ ແລະ ມາດຕະການຕ່າງໆ ໃນການຄຸ້ມຄອງການຜະລິດ, ນຳເຂົ້າ-ສົ່ງອອກ, ນຳເຂົ້າຊົ່ວຄາວ, ສົ່ງຜ່ານ, ຈໍລະຈອນຈຳໜ່າຍ, ຊຸກຍູ້ ສົ່ງເສີມ, ຕິດຕາມ ແລະ ກວດກາ ພາຍໃນປະເທດໃຫ້ມີຄຸນນະພາບ ແລະ ມາດຕະຖານ ແນໃສ່ຮັບປະກັນຄວາມປອດໄພແກ່ຜູ້ຊົມໃຊ້.

### ມາດຕາ 2 ລະດັບຄາດໝາຍ (ປັບປຸງ)

ຮັບປະກັນໃຫ້ຜະລິດຕະພັນເຄື່ອງສຳອາງມີຄຸນນະພາບ, ມາດຕະຖານ ແລະ ປອດໄພ. ດຳເນີນທຸລະກິດໃຫ້ຖືກຕ້ອງຕາມກົດໝາຍ, ລະບຽບການ, ຫຼັກການທີ່ໄດ້ກຳນົດໄວ້, ສອດຄ່ອງກັບລະບຽບການຄຸ້ມຄອງຂອງພາກພື້ນ ແລະ ສາກົນ. ເປັນບ່ອນອີງໃຫ້ແກ່ເຈົ້າໜ້າທີ່ພາກລັດໃນແຕ່ລະຂັ້ນ ເພື່ອຄຸ້ມຄອງຜູ້ປະກອບການໃນການດຳເນີນທຸລະກິດ.

### ມາດຕາ 3 ຂອບເຂດການນຳໃຊ້ (ໃໝ່)

ຂໍ້ຕົກລົງສະບັບນີ້ ມີຂອບເຂດການນຳໃຊ້ສຳລັບບຸກຄົນ, ນິຕິບຸກຄົນ, ການຈັດຕັ້ງພາຍໃນ ແລະ ຕ່າງປະເທດ ທີ່ດຳເນີນທຸລະກິດກ່ຽວກັບການຜະລິດ, ນຳເຂົ້າ-ສົ່ງອອກ, ນຳເຂົ້າຊົ່ວຄາວ, ສົ່ງຜ່ານ ແລະ ຈໍລະຈອນຈຳໜ່າຍ ຜະລິດຕະພັນເຄື່ອງສຳອາງໃນ ສປປ ລາວ.

ມາດຕາ 4 ການອະທິບາຍຄຳສັບ (ປັບປຸງ)

ຄຳສັບທີ່ນຳໃຊ້ໃນຂໍ້ຕົກລົງສະບັບນີ້ ມີຄວາມໝາຍດັ່ງນີ້:

1. **ຜະລິດຕະພັນເຄື່ອງສຳອາງ ໝາຍເຖິງ:**
   - ສານ ຫຼື ການປຸງແຕ່ງໃດໜຶ່ງ ທີ່ມີຈຸດປະສົງໃຊ້ສຳລັບທາ, ຖູ, ນວດ, ຂັດ, ໂຮຍ, ສີດພົ່ນ, ຢອດ, ອົບ ຫຼື ກະທຳດ້ວຍວິທີການໃດໜຶ່ງຕໍ່ຮ່າງກາຍ ເພື່ອຄວາມສະອາດ, ເຮັດໃຫ້ມີກິ່ນຫອມ ແລະ ສວຍງາມ ຫຼື ສົ່ງເສີມໃຫ້ເກີດຄວາມງາມ ລວມທັງການປົກປ້ອງ ແລະ ເບິ່ງແຍງສ່ວນຕ່າງໆຂອງ ຜິວໜັງພາຍນອກຮ່າງກາຍ, ຜົມ, ແຂ້ວ, ຜີ້ງປາກ, ເລັບ, ສົບ ແຕ່ບໍ່ກວມເອົາເຄື່ອງປະດັບເອ້ ແລະ ປະເພດຜະລິດຕະພັນສັກ, ສີດ, ກິນ ທີ່ບໍ່ມີຈຸດປະສົງເພື່ອນຳໃຊ້ພາຍນອກຂອງຮ່າງກາຍ;
   - ສານ ຫຼື ການປຸງແຕ່ງໃດໜຶ່ງ ທີ່ມີຈຸດປະສົງນຳໃຊ້ເປັນສ່ວນປະສົມໃນການຜະລິດ ເຄື່ອງສຳອາງໂດຍສະເພາະຕາມທີ່ກະຊວງສາທາລະນະສຸກກຳນົດ ແລະ ຕາມລະບຽບການເຄື່ອງສຳອາງອາຊຽນໃນແຕ່ລະໄລຍະ;
   - ສານ ຫຼື ການປຸງແຕ່ງໃດໜຶ່ງ ທີ່ບໍ່ມີຈຸດປະສົງໃນການປິ່ນປົວ, ບຳບັດ, ບັນເທົາ ຫຼື ປ້ອງກັນພະຍາດຕ່າງໆຂອງຄົນ.
2. **ເຄື່ອງບັນຈຸຫຸ້ມຫໍ່:** ໝາຍເຖິງວັດຖຸໃດໜຶ່ງທີ່ໃຊ້ບັນຈຸ ຫຼື ຫຸ້ມຫໍ່ຜະລິດຕະພັນເຄື່ອງສຳອາງໂດຍສະເພາະ.
3. **ສະຫຼາກ (ໃໝ່):** ໝາຍເຖິງເຄື່ອງໝາຍ, ຮູບພາບ ຫຼື ຂໍ້ຄວາມທີ່ຕິດຢູ່ພາຊະນະ ແລະ ເຄື່ອງຫຸ້ມຫໍ່ຜະ ລິດຕະພັນເຄື່ອງສຳອາງ ເພື່ອສະແດງຂໍ້ມູນກ່ຽວກັບສ່ວນປະກອບຜະລິດຕະພັນເຄື່ອງສຳອາງ, ການນຳໃຊ້, ເກັບຮັກສາ, ຄຳເຕືອນ, ຜູ້ຜະລິດ, ຜູ້ນຳເຂົ້າ, ຜູ້ຈຳໜ່າຍ, ຊຸດຜະລິດ, ວັນເດືອນປີ ຜະລິດ, ວັນເດືອນປີ ໝົດອາຍຸ ແລະ ອື່ນໆ ຊຶ່ງລວມເຖິງເອກະສານ ຫຼື ຄູ່ມືເພື່ອໃຊ້ສຳລັບແນະນຳຜະລິດຕະພັນເຄື່ອງສຳອາງນັ້ນໆ.
4. **ການຈົດແຈ້ງ (ໃໝ່):** ໝາຍເຖິງການນຳເອົາຜະລິດຕະພັນເຄື່ອງສຳອາງ ມາຈົດແຈ້ງຕໍ່ ກົມອາຫານ ແລະ ຢາ, ກະຊວງສາທາລະນະສຸກ ກ່ອນການນຳເຂົ້າ ແລະ ວາງຈຳໜ່າຍຜະລິດຕະພັນເຄື່ອງສຳອາງໃນ ສປປ ລາວ.
5. **ການຜະລິດ (ປັບປຸງ):** ໝາຍເຖິງການປຸງແຕ່ງ ຫຼື ການດຳເນີນການປະສົມ, ປ່ຽນຮູບ, ແປສະພາບ, ແບ່ງບັນຈຸ ຫຼື ປ່ຽນເຄື່ອງບັນຈຸຫຸ້ມຫໍ່.
6. **ຫຼັກການ ການຜະລິດທີ່ດີ:** ໝາຍເຖິງລະບົບຮັບປະກັນຄຸນນະພາບ ຊຶ່ງຜູ້ທຳການຜະລິດຕ້ອງໄດ້ ປະຕິບັດຕາມບັນດາອົງປະກອບຂອງຫຼັກການ ການຜະລິດທີ່ດີຂອງເຄື່ອງສຳອາງ.
7. **ການນຳເຂົ້າ (ປັບປຸງ):** ໝາຍເຖິງນຳເຂົ້າຜະລິດຕະພັນເຄື່ອງສຳອາງມາຈາກຕ່າງປະເທດ ເພື່ອຈຳໜ່າຍໂດຍປະຕິບັດຕາມກົດໝາຍ ແລະ ລະບຽບການຂອງ ສປປ ລາວ.
8. **ການສົ່ງອອກ (ໃໝ່):** ໝາຍເຖິງການສົ່ງຜະລິດຕະພັນເຄື່ອງສຳອາງອອກໄປຕ່າງປະເທດ ໂດຍປະຕິບັດຕາມກົດໝາຍ ແລະ ລະບຽບການ ສປປ ລາວ ແລະ ລະບຽບການປະເທດປາຍທາງ.
9. **ການນຳເຂົ້າຊົ່ວຄາວ (ໃໝ່):** ໝາຍເຖິງການນຳເຂົ້າວັດຖຸດິບ, ຜະລິດຕະພັນເຄິ່ງສຳເລັດຮູບ ຫຼື ສຳເລັດຮູບເພື່ອມາຜະລິດ, ປຸງແຕ່ງ, ແບ່ງບັນຈຸ, ວາງສະແດງ, ທົດລອງ, ຄົ້ນຄວ້າ, ວິໄຈ, ຄ່ຽນຖ່າຍ ຫຼື ຈັດເກັບໄວ້ໃນສາງໄລຍະໜຶ່ງແນໃສ່ເພື່ອສົ່ງອອກ ໂດຍບໍ່ອະນຸຍາດໃຫ້ຈຳໜ່າຍໃນ ສປປ ລາວ.
10. **ການສົ່ງຜ່ານ (ໃໝ່):** ໝາຍເຖິງການຂົນສົ່ງຜະລິດຕະພັນເຄື່ອງສຳອາງ ຜ່ານດິນແດນຂອງ ສປປ ລາວ ໄປຍັງປະເທດທີສາມ.
11. **ວັດຖຸດິບ (ໃໝ່):** ໝາຍເຖິງສານເຄມີ ຫຼື ວັດຖຸໃດໜຶ່ງ ທີ່ໄດ້ມາຈາກແຫຼ່ງທຳມະຊາດ ຫຼື ຈາກການສັງເຄາະທີ່ນຳໃຊ້ເປັນສ່ວນປະສົມຢູ່ໃນສູດຕຳລາ, ໃນຂະບວນການຜະລິດ ແລະ ປຸງແຕ່ງຜະລິດຕະພັນເຄື່ອງສຳອາງ.
12. **ການມັດຫໍ່ຄືນ ແລະ ແບ່ງບັນຈຸ (ໃໝ່):** ໝາຍເຖິງການປ່ຽນແປງປະລິມານການບັນຈຸ ຜະລິດຕະພັນເຄື່ອງສຳອາງຈາກຮູບແບບການບັນຈຸເດີມ ເພື່ອໃຫ້ມີຄວາມເໝາະສົມໃນການນຳໄປຈຳໜ່າຍ ແລະສອດຄ່ອງຕາມລະບຽບການ.
13. **ການຈໍລະຈອນຈຳໜ່າຍ:** ໝາຍເຖິງການຂາຍ, ແຈກຢາຍ ຫຼື ແລກປ່ຽນ ເພື່ອຜົນປະໂຫຍດໃນທາງການຄ້າ ແລະ ລວມທັງການມີໄວ້ໃນຄອບຄອງເພື່ອຂາຍ.

14. **ສະຖານທີ່:** ໝາຍເຖິງທີ່ຕັ້ງຂອງອາຄານ ຫຼື ພາກສ່ວນໃດໜຶ່ງຂອງອາຄານ ແລະ ລວມທັງບໍລິເວນຂອງສະຖານທີ່ງໃຊ້ໃນການດຳເນີນທຸລະກິດ.
15. **ຜູ້ປະກອບການ (ປັບປຸງ):** ໝາຍເຖິງຜູ້ທີ່ໄດ້ຮັບອະນຸຍາດຈາກກະຊວງສາທາລະນະສຸກ ຫຼື ຂະແໜງການອື່ນທີ່ກ່ຽວຂ້ອງ ຕາມລະບຽບການໃຫ້ດຳເນີນທຸລະກິດກ່ຽວກັບການຜະລິດ, ນຳເຂົ້າ-ສົ່ງອອກ, ນຳເຂົ້າຊົ່ວຄາວ, ສົ່ງຜ່ານ ແລະ ຈຳໜ່າຍ ຜະລິດຕະພັນເຄື່ອງສຳອາງ.

**ມາດຕາ 5 ຂໍ້ມູນກ່ຽວກັບຜະລິດຕະພັນ (ໃໝ່)**

ບຸກຄົນ, ນິຕິບຸກຄົນ ທີ່ຮັບຜິດຊອບຕໍ່ການຜະລິດ, ນຳເຂົ້າ-ສົ່ງອອກ ແລະ ວາງຈຳໜ່າຍຜະລິດຕະພັນເຄື່ອງສຳອາງ ໃນ ສປປ ລາວ ຕ້ອງເກັບຮັກສາຂໍ້ມູນລາຍລະອຽດກ່ຽວກັບຄຸນນະພາບ ແລະ ຄວາມປອດໄພຂອງຜະລິດຕະພັນເຄື່ອງສຳອາງ ເພື່ອຢັ້ງຢືນຄວາມຖືກຕ້ອງ ແລະ ສອດຄ່ອງກັບຄຸນນະພາບຜະລິດຕະພັນເຄື່ອງສຳອາງ. ຂໍ້ມູນດັ່ງກ່າວຢ່າງໜ້ອຍຕ້ອງປະກອບດ້ວຍ:

- ສູດຕຳລາຂອງຜະລິດຕະພັນ;
- ຄຸນນະພາບ, ມາດຕະຖານຂອງວັດຖຸດິບ ແລະ ຜະລິດຕະພັນສຳເລັດຮູບ;
- ວິທີປຸງແຕ່ງ ແລະ ຜະລິດ ສອດຄ່ອງກັບຫຼັກການ ການຜະລິດທີ່ດີ;
- ໃບຢັ້ງຢືນການຜະລິດທີ່ດີຂອງຜະລິດຕະພັນເຄື່ອງສຳອາງ ທີ່ມີຄວາມສ່ຽງສູງ ແລະ ກາງ.

**ມາດຕາ 6 ການຮັບເອົາການຊ່ວຍເຫຼືອ (ໃໝ່)**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງທີ່ມີຈຸດປະສົງບໍລິຈາກ ຫຼື ຊ່ວຍເຫຼືອຜະລິດຕະພັນເຄື່ອງສຳອາງ ຈາກພາຍໃນ ຫຼື ຕ່າງປະເທດ ໃຫ້ແກ່ ສປປ ລາວ ຕ້ອງມີຄຸນນະພາບ ແລະ ປອດໄພ ແລະ ສອດຄ່ອງກັບຄວາມຕ້ອງການນຳໃຊ້ ໂດຍມີການຢັ້ງຢືນຈາກປະເທດຕົ້ນກຳເນີດ ແລະ ໄດ້ຮັບອະນຸຍາດຈາກກະຊວງສາທາລະນະສຸກ. ພາກສ່ວນທີ່ຮັບເອົາການຊ່ວຍເຫຼືອ ຕ້ອງແຈກຢາຍໃຫ້ຖືກຕ້ອງຕາມຈຸດປະສົງຂອງການຊ່ວຍເຫຼືອ.

**ມາດຕາ 7 ການຝຶກອົບຮົມ ແລະ ການປູກຈິດສຳນຶກ (ໃໝ່)**

ເພື່ອໃຫ້ຜູ້ຊົມໃຊ້ມີຄວາມຮູ້ ແລະ ເຂົ້າໃຈກ່ຽວກັບຄວາມປອດໄພຜະລິດຕະພັນເຄື່ອງສຳອາງ ຕ້ອງດຳເນີນການໂຄສະນາ, ຝຶກອົບຮົມ, ສຳມະນາ, ປູກຈິດສຳນຶກ ແລະ ເລືອກຊົມໃຊ້ຜະລິດຕະພັນເຄື່ອງສຳອາງ ໃຫ້ປອດໄພຢ່າງເປັນລະບົບຕໍ່ເນື່ອງ ແລະ ກວ້າງຂວາງດ້ວຍຫຼາຍຮູບການ. ສຳລັບຜູ້ປະກອບການຜະລິດຕະພັນເຄື່ອງສຳອາງກໍ່ໃຫ້ຮັບຮູ້ ແລະ ເຂົ້າໃຈກ່ຽວກັບຫຼັກການ ການປະຕິບັດທີ່ດີ ແລະ ສອດຄ່ອງກັບລະບຽບການທີ່ກຳນົດ ເພື່ອຮັບປະກັນໃຫ້ຜະລິດຕະພັນເຄື່ອງສຳອາງປອດໄພຕໍ່ຜູ້ຊົມໃຊ້.

## ໝວດທີ II

## ການດຳເນີນທຸລະກິດ ກ່ຽວກັບຜະລິດຕະພັນເຄື່ອງສຳອາງ

**ມາດຕາ 8 ການດຳເນີນທຸລະກິດຜະລິດຕະພັນເຄື່ອງສຳອາງ (ໃໝ່)**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງໃດໜຶ່ງ ທີ່ມີຈຸດປະສົງຢາກດຳເນີນທຸລະກິດກ່ຽວກັບການຜະລິດ, ແບ່ງບັນຈຸ, ນຳເຂົ້າ-ສົ່ງອອກ, ນຳເຂົ້າຊົ່ວຄາວ, ສົ່ງຜ່ານ ແລະ ຈຳໜ່າຍຜະລິດຕະພັນເຄື່ອງສຳອາງ ຕ້ອງໄດ້ຮັບການເຫັນດີການຈົດທະບຽນວິສາຫະກິດ ຈາກກະຊວງອຸດສາຫະກຳ ແລະ ການຄ້າ ແລະ ຂໍອະນຸຍາດທາງດ້ານວິຊາການ ຈາກກະຊວງສາທາລະນະສຸກ ເສຍກ່ອນ.

**ມາດຕາ 9 ການຈົດແຈ້ງຜະລິດຕະພັນເຄື່ອງສຳອາງ (ໃໝ່)**

ຜະລິດຕະພັນເຄື່ອງສຳອາງທີ່ຈໍລະຈອນຈຳໜ່າຍຢູ່ ສປປ ລາວ ຕ້ອງໄດ້ຈົດແຈ້ງ ຢູ່ກົມອາຫານ ແລະ ຢາ, ກະຊວງສາທາລະນະສຸກເສຍກ່ອນ ຊຶ່ງສາມາດຈົດແຈ້ງໄດ້ 2 ຮູບແບບຄື: ຜ່ານລະບົບເອກະສານ ແລະ ຜ່ານລະບົບອີເລັກໂຕຼນິກ.

ກ່ອນຈະອະນຸມັດການຈົດແຈ້ງຜະລິດຕະພັນເຄື່ອງສຳອາງນັ້ນ ກົມອາຫານ ແລະ ຢາ, ກະຊວງສາທາລະນະສຸກ ຕ້ອງໄດ້ພິຈາລະນາຕາມຂັ້ນຕອນ, ເງື່ອນໄຂ, ຂໍ້ຮຽກຮ້ອງດ້ານມາດຕະຖານຂອງກະຊວງສາທາລະນະສຸກ ເພື່ອຮັບປະກັນຄຸນນະພາບ ແລະ ຄວາມປອດໄພຕໍ່ຜູ້ຊົມໃຊ້.

**ມາດຕາ 10 ເງື່ອນໄຂການພິຈາລະນາການຈົດແຈ້ງ (ໃໝ່)**

1. ຜູ້ມີສິດຈົດແຈ້ງຜະລິດຕະພັນເຄື່ອງສຳອາງ ແມ່ນຜູ້ປະກອບການໂຮງງານ, ບໍລິສັດທີ່ດຳເນີນທຸລະກິດກ່ຽວກັບການຜະລິດ, ນຳເຂົ້າ-ສົ່ງອອກ, ນຳເຂົ້າຊົ່ວຄາວ ແລະ ການຈຳໜ່າຍຜະລິດຕະພັນເຄື່ອງສຳອາງ ໃນນີ້ລວມທັງຜູ້ຈັດການ ຫຼື ຜູ້ຕາງໜ້າ, ນິຕິບຸກຄົນ ຊຶ່ງເປັນຜູ້ດຳເນີນທຸລະກິດຜະລິດຕະພັນເຄື່ອງສຳອາງ ເຊິ່ງໄດ້ຮັບອະນຸຍາດຖືກຕ້ອງຈາກຂະແໜງການສາທາລະນະສຸກ;
2. ກົມອາຫານ ແລະ ຢາ, ກະຊວງສາທາລະນະສຸກ ຈະອະນຸມັດຈົດແຈ້ງຜະລິດຕະພັນເຄື່ອງສຳອາງ ຕ້ອງໄດ້ພິຈາລະນາໂດຍອີງໃສ່ເງື່ອນໄຂ ແລະ ຂໍ້ມູນທາງດ້ານຄວາມປອດໄພຂອງຜະລິດຕະພັນກຳນົດອອກ;
3. ໃບທະບຽນວິສາຫະກິດທີ່ກ່ຽວຂ້ອງ.

**ມາດຕາ 11 ການປະກອບເອກະສານເພື່ອຈົດແຈ້ງ (ໃໝ່)**

ການປະກອບເອກະສານເພື່ອຈົດແຈ້ງໃໝ່ ແລະ ຂໍຕໍ່ຈົດແຈ້ງມີດັ່ງນີ້:

**ກ. ຈົດແຈ້ງໃໝ່**

1. ໃບສະເໜີ;
2. ແບບຟອມຈົດແຈ້ງ;
3. ສູດຕຳລາຕ້ອງລະບຸຊື່ສານເຄມີທັງໝົດທີ່ໃຊ້ເປັນສ່ວນປະສົມ, ສຳລັບສານເຄມີ ທີ່ຈຳກັດປະລິມານນຳໃຊ້ຕ້ອງແຈ້ງປະລິມານ ແລະ ໜ້າທີ່ການຂອງແຕ່ລະສານເຄມີ;
4. ໃບມອບສິດຈາກເຈົ້າຂອງໂຮງງານຜູ້ຜະລິດ/ເຈົ້າຂອງລິຂະສິດ;
5. ສະຫຼາກ ແລະ ເຄື່ອງຫຸ້ມຫໍ່;
6. ເລກລະຫັດຂອງຊຸດຜະລິດ;
7. ໃບຢັ້ງຢືນການຈົດແຈ້ງຈາກປະເທດຜູ້ຜະລິດ (ຖ້າມີ);
8. ໃບຢັ້ງຢືນການວິໄຈ;
9. ສະຫຼຸບຫຍໍ້ການກ່າວອ້າງການນຳໃຊ້;
10. ສະຫຼຸບຫຍໍ້ຜົນກະທົບຕໍ່ສຸຂະພາບ;
11. ສະຫຼຸບຫຍໍ້ການປະເມີນຄວາມປອດໄພ;
12. ການຢັ້ງຢືນການຜະລິດເຄື່ອງສຳອາງທີ່ດີ (GMP) ສຳລັບຜະລິດຕະພັນທີ່ມີຄວາມສ່ຽງສູງ ສະບັບພາສາອັງກິດທີ່ມີຜົນບັງຄັບໃຊ້;
13. ຕົວຢ່າງຂອງຜະລິດຕະພັນ 1 ຕົວຢ່າງ ທີ່ເປັນຕົວແທນໃຫ້ທຸກຂະໜາດຂອງຜະລິດຕະພັນ (ໃນກໍລະນີທີ່ເປັນຜະລິດຕະພັນ ຫາກໍ່ມາຈົດແຈ້ງເປັນເທື່ອທຳອິດ);

14. ໃບທະບຽນວິສາຫະກິດທີ່ກ່ຽວຂ້ອງ.

**ໝາຍເຫດ:** ສໍາລັບຂໍ້ 12 ຕ້ອງມີເອກະສານເກັບໄວ້ທີ່ໂຮງງານ ຫຼື ບໍລິສັດ, ສໍາລັບຜະລິດຕະພັນເຄື່ອງສໍາອາງ ທີ່ມີຄວາມສ່ຽງກາງ ແລະ ຕໍ່າ.

**ຂ. ຂໍຕໍ່ຈົດແຈ້ງ**

1. ໃບສະເໜີ;
2. ແບບຟອມຈົດແຈ້ງ;
3. ສູດຕໍາລາຕ້ອງລະບຸຊື່ສານເຄມີທັງໝົດທີ່ໃຊ້ເປັນສ່ວນປະສົມ, ສໍາລັບສານເຄມີ ທີ່ຈໍາກັດປະລິມານນໍາໃຊ້ ຕ້ອງແຈ້ງປະລິມານ ແລະ ໜ້າທີ່ການຂອງແຕ່ລະສານເຄມີ;
4. ໃບມອບສິດຈາກເຈົ້າຂອງໂຮງງານຜູ້ຜະລິດ/ເຈົ້າຂອງລິຂະສິດ;
5. ໃບຢັ້ງຢືນການຈົດແຈ້ງຈາກປະເທດຜູ້ຜະລິດ (ຖ້າມີ);
6. ໃບຢັ້ງຢືນການວິໄຈ;
7. ສະຫຼຸບຫຍໍ້ຜົນກະທົບຕໍ່ສຸຂະພາບ;
8. ການຢັ້ງຢືນການຜະລິດເຄື່ອງສໍາອາງທີ່ດີ (GMP) ສໍາລັບຜະລິດຕະພັນທີ່ມີຄວາມສ່ຽງສູງ ສະບັບພາສາອັງກິດ ທີ່ມີຜົນບັງຄັບໃຊ້.

**ໝາຍເຫດ:** ສໍາລັບຂໍ້ 8 ຕ້ອງມີເອກະສານເກັບໄວ້ທີ່ໂຮງງານ ຫຼື ບໍລິສັດ, ສໍາລັບຜະລິດຕະພັນເຄື່ອງສໍາອາງ ທີ່ມີຄວາມສ່ຽງກາງ ແລະ ຕໍ່າ.

**ມາດຕາ 12 ອາຍຸໃບຢັ້ງຢືນການຈົດແຈ້ງ (ປັບປຸງ)**

ອາຍຸໃບຢັ້ງຢືນການຈົດແຈ້ງ ຜະລິດຕະພັນເຄື່ອງສໍາອາງມີອາຍຸ 3 ປີ ນັບແຕ່ວັນທີອະນຸມັດເປັນຕົ້ນໄປ, ເຈົ້າຂອງຜະລິດຕະພັນເຄື່ອງສໍາອາງ ຕ້ອງໄດ້ຍື່ນໃບສະເໜີຂໍຕໍ່ຈົດແຈ້ງໃໝ່ ກ່ອນຈະໝົດອາຍຸ 90 ວັນ, ຖ້າຫາກບໍ່ປະຕິບັດຕາມວັນເວລາດັ່ງກ່າວ ໃບຢັ້ງຢືນການຈົດແຈ້ງແມ່ນຖືກລົບລ້າງ.

**ມາດຕາ 13 ໄລຍະເວລາການພິຈາລະນາການຈົດແຈ້ງ (ໃໝ່)**

1. ກໍານົດ 15 ວັນ ລັດຖະການ ໃນການພິຈາລະນາອອກອະນຸຍາດຈົດແຈ້ງໃໝ່ສໍາລັບ 1 ຜະລິດຕະພັນເຄື່ອງສໍາອາງ;
2. ກໍານົດ 10 ວັນ ລັດຖະການ ໃນການຕໍ່ອະນຸຍາດຈົດແຈ້ງ ສໍາລັບ 1 ຜະລິດຕະພັນເຄື່ອງສໍາອາງ;

ໄລຍະເວລາໃນການພິຈາລະນາການອອກອະນຸຍາດຈົດແຈ້ງໃໝ່ ແລະ ຕໍ່ອະນຸຍາດຈົດແຈ້ງຈະດໍາເນີນການ ພາຍຫຼັງທີ່ໄດ້ຮັບເອກະສານຄົບຖ້ວນຕາມລະບຽບການກໍານົດ ແລະ ຕ້ອງສອດ ຄ່ອງຕາມມາດຕາ 11 ແລະ 12.

**ມາດຕາ 14 ການປະຕິເສດການຈົດແຈ້ງ ແລະ ຕໍ່ຈົດແຈ້ງ (ໃໝ່)**

ໃນກໍລະນີທີ່ພົບເຫັນວ່າຜະລິດຕະພັນເຄື່ອງສໍາອາງ ທີ່ຖືກສະເໜີເພື່ອຂໍຈົດແຈ້ງ ແລະ ຕໍ່ຈົດແຈ້ງ ບໍ່ໄດ້ມາດຕະຖານ, ບໍ່ປອດໄພຕາມລະບຽບການກໍານົດ ແລະ ບໍ່ສອດຄ່ອງກັບມາດຕາ 11 ແລະ 12 ແມ່ນຈະຖືກປະຕິເສດການຈົດແຈ້ງ.

**ມາດຕາ 15 ການລົບລ້າງຈົດແຈ້ງ (ປັບປຸງ)**

ການລົບລ້າງຈົດແຈ້ງຜະລິດຕະພັນເຄື່ອງສໍາອາງ ໃຫ້ປະຕິບັດຕາມເງື່ອນໄຂດັ່ງລຸ່ມນີ້:

1. ຄຸນນະພາບ ແລະ ຄວາມປອດໄພບໍ່ຖືກຕ້ອງຕາມທີ່ໄດ້ຈົດແຈ້ງໄວ້;
2. ມີສ່ວນປະກອບຂອງສານເຄມີ ທີ່ບໍ່ສອດຄ່ອງຕາມບັນຊີຂອງກົມອາຫານ ແລະ ຢາ, ກະຊວງສາທາລະນະສຸກ ໄດ້ວາງອອກເປັນແຕ່ລະໄລຍະ (ເອກະສານຊ້ອນທ້າຍ);

3. ມີການແຈ້ງເຕືອນຈາກປະເທດອາຊຽນ (PMAS);
4. ໃນກໍລະນີ ມີແຈ້ງຖອນໃບຈົດແຈ້ງຈາກເຈົ້າຂອງຜູ້ຜະລິດ ຫຼື ເຈົ້າຂອງລິຂະສິດ;
5. ພາຍຫຼັງໃບຢັ້ງຢືນການຈົດແຈ້ງໝົດອາຍຸ ຕາມກຳນົດໄວ້ 3 ປີ, ບໍລິສັດ/ໂຮງງານ ບໍ່ມາຕໍ່ອາຍຸໃບຈົດແຈ້ງພາຍໃນ 60-90 ວັນ;
6. ບໍ່ສາມາດສືບຕໍ່ເພື່ອດຳເນີນທຸລະກິດໄດ້.

### ມາດຕາ 16 ການຈຳໜ່າຍ (ປັບປຸງ)

ຜະລິດຕະພັນເຄື່ອງສຳອາງທີ່ໄດ້ຮັບການຈົດແຈ້ງແລ້ວ ສາມາດຈຳໜ່າຍໄດ້ຢູ່ໂຮງງານ, ບໍລິສັດ, ຮ້ານຂາຍຢາ, ຮ້ານເສີມຄວາມງາມ, ສູນຄວາມງາມ ຫຼື ຕາມຮ້ານຄ້າທົ່ວໄປ ທີ່ໄດ້ຮັບອະນຸຍາດຢ່າງຖືກຕ້ອງ, ຜະລິດຕະພັນເຄື່ອງສຳອາງ ທີ່ຈຳໜ່າຍພາຍໃນຮ້ານຕ້ອງຈັດວາງເປັນລະບຽບ, ບໍ່ປົນເປກັບວັດຖຸອື່ນໆ ແລະ ຕ້ອງຮັບປະກັນຄຸນນະພາບ ແລະ ຄວາມປອດໄພ.

ຜູ້ດຳເນີນທຸລະກິດກ່ຽວກັບຜະລິດຕະພັນເຄື່ອງສຳອາງ ຕ້ອງຮັບຜິດຊອບຕໍ່ຄຸນນະພາບ ແລະ ຄວາມປອດໄພຂອງຜະລິດຕະພັນຂອງຕົນຕໍ່ໜ້າກົດໝາຍ.

### ມາດຕາ 17 ການໂຄສະນາ (ປັບປຸງ)

ເນື້ອໃນການໂຄສະນາເຄື່ອງສຳອາງ ຕ້ອງຖືກຕາມຄວາມເປັນຈິງ ແລະ ສອດຄ່ອງຕາມຄຸນນະພາບ, ປະເພດ, ຊະນິດ, ຄຸນລັກສະນະ, ເຄື່ອງໝາຍການຄ້າ, ການບໍລິການ, ບໍ່ສຽດສີ-ໝິ່ນປະໝາດຜະລິດຕະພັນອື່ນ ລວມທັງການບໍລິການຜູ້ອື່ນ ແລະ ຖືກຕ້ອງຕາມຂໍ້ມູນທີ່ໄດ້ຈົດແຈ້ງ. ການເຜີຍແຜ່ ແລະ ໂຄສະນາຜະລິດຕະພັນເຄື່ອງສຳອາງ ແມ່ນບໍ່ໃຫ້ກ່າວອ້າງເຖິງສັບພະຄຸນໃນການປິ່ນປົວພະຍາດ ແລະ ມີລັກສະນະຊວນເຊື່ອເກີນຄວາມເປັນຈິງ.

## ໝວດທີ III
## ເງື່ອນໄຂການສ້າງຕັ້ງໂຮງງານຜະລິດເຄື່ອງສຳອາງ (ປັບປຸງ)

### ມາດຕາ 18 ເງື່ອນໄຂຂອງຜູ້ຜະລິດເຄື່ອງສຳອາງ (ປັບປຸງ)

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງໃດໜຶ່ງ ທີ່ມີຈຸດປະສົງຢາກດຳເນີນທຸລະກິດ ກ່ຽວກັບການຜະລິດ ຕ້ອງມີເງື່ອນໄຂດັ່ງນີ້:

1. ມີເພສັດຊະກອນ ຫຼື ນັກເຄມີສາດ ທີ່ມີໃບປະກາດສະນີຍະບັດ ຫຼື ໃບຢັ້ງຢືນສຳເລັດການສຶກສາວິຊາຊີບເພສັດຊະກຳ ຫຼື ເຄມີສາດ ຫຼື ບຸກຄົນທີ່ໄດ້ຜ່ານການຝຶກອົບຮົມທີ່ກ່ຽວຂ້ອງກັບດ້ານນີ້ ທີ່ເປັນຄົນສັນຊາດລາວ;
2. ບໍ່ເຄີຍຕ້ອງໂທດ ກ່ຽວກັບຢາ ຫຼື ຢາເສບຕິດ ຫຼື ຜະລິດຕະພັນການແພດ;
3. ຕ້ອງແມ່ນຜູ້ທີ່ບໍ່ຢູ່ໃນໄລຍະດຳເນີນຄະດີ ຫຼື ປະລະໜ້າທີ່ ຫຼື ຖືກປະຕິບັດວິໄນ ຍ້ອນການຜິດພາດທາງດ້ານວິຊາຊີບເພສັດຊະກຳ;
4. ມີຈັນຍາບັນດ້ານເຄື່ອງສຳອາງ ແລະ ທຸລະກິດ;
5. ມີບຸກຄະລາກອນທີ່ມີຄວາມຮູ້ຄວາມສາມາດ;
6. ມີສຸຂະພາບດີ, ບໍ່ເປັນໂລກຈິດ ຫຼື ພະຍາດຕິດແປດອື່ນໆ;
7. ມີຫຼັກການການຜະລິດທີ່ດີ, ສະຖານທີ່ເໝາະສົມ, ມີສິ່ງອຳນວຍຄວາມສະດວກທີ່ຈຳເປັນ, ມີສາງເກັບມ້ຽນທີ່ໄດ້ມາດຕະຖານ, ມີພາຫະນະຂົນສົ່ງ ແລະ ມີສິ່ງອຳນວຍຄວາມສະດວກ ທີ່ຈຳເປັນອື່ນໆ;

8. ມີລະບົບຕິດຕາມ ເພື່ອເກັບຄືນຜະລິດຕະພັນເຄື່ອງສຳອາງ ໃນກໍລະນີທີ່ພົບວ່າບໍ່ປອດໄພຕໍ່ຜູ້ຊົມໃຊ້ພາຍຫຼັງທີ່ໄດ້ວາງຈຳໜ່າຍແລ້ວ;
9. ມີລະບົບປົກປັກຮັກສາຄວາມປອດໄພ ແລະ ສິ່ງແວດລ້ອມ.

**ມາດຕາ 19 ການປະກອບເອກະສານເພື່ອຂໍໃບອະນຸຍາດທາງດ້ານວິຊາການ (ໃໝ່)**

1. ໜັງສືສະເໜີ — 01 ສະບັບ
2. ຊີວະປະຫັວດຫຍໍ້ ທີ່ມີເນື້ອໃນຄົບຖ້ວນ ແລະ ມີຮູບຕິດ (ບໍ່ກາຍ 01 ປີ) — 01 ສະບັບ
3. ສຳເນົາໃບປະກາດສະນີຍະບັດ ຫຼື ໃບຢັ້ງຢືນການຝຶກອົບຮົມດ້ານການຜະລິດເຄື່ອງສຳອາງ — 01 ສະບັບ
4. ໃບຢັ້ງຢືນທີ່ຢູ່ປະຈຸບັນທີ່ມີຮູບຕິດ (ບໍ່ກາຍ 03 ເດືອນ) — 01 ສະບັບ
5. ຮູບຖ່າຍຂະໜາດ 4X6 (ບໍ່ກາຍ 01 ປີ) ຈຳນວນ — 02 ໃບ
6. ແຜນວາດທີ່ຕັ້ງຂອງໂຮງງານ — 01 ສະບັບ
7. ແຜນວາດພາຍໃນໂຮງງານ — 01 ສະບັບ
8. ໃບຢັ້ງຢືນການລົງກວດກາສະຖານທີ່ຂອງເຈົ້າໜ້າທີ່ກ່ອນການອະນຸຍາດ — 01 ສະບັບ
9. ໃບທະບຽນວິສາຫະກິດ ແລະ ໃບອະນຸຍາດໃຫ້ດຳເນີນກິດຈະການຈາກຂະແໜງການກ່ຽວຂ້ອງ — 01 ສະບັບ

**ມາດຕາ 20 ການປະກອບເອກະສານ ເພື່ອຂໍຕໍ່ໃບອະນຸຍາດທາງດ້ານວິຊາການ (ໃໝ່)**

1. ໜັງສືສະເໜີຂໍຕໍ່ອາຍຸ — 01 ສະບັບ
2. ໃບຢັ້ງຢືນທີ່ຢູ່ປະຈຸບັນທີ່ມີຮູບຕິດ (ບໍ່ກາຍ 03 ເດືອນ) — 01 ສະບັບ
3. ບົດສະຫຼຸບການເຄື່ອນໄຫວ 1 ປີ ທີ່ຜ່ານມາ ແລະ ແຜນການປີຕໍ່ໄປ — 01 ສະບັບ
4. ແຜນວາດພາຍໃນໂຮງງານ (ຖ້າມີການປ່ຽນແປງ) — 01 ສະບັບ
5. ໃບທະບຽນເກົ່າທີ່ໝົດອາຍຸ (ສະບັບແທ້) — 01 ສະບັບ
6. ສຳລັບໃບທະບຽນ ທີ່ໝົດບ່ອນລາຍເຊັນ ຕໍ່ທະບຽນໃຫ້ປະກອບຮູບຖ່າຍຂະໜາດ 4x6 (ບໍ່ກາຍ 01 ປີ) ຈຳນວນ — 02 ໃບ
7. ໃບທະບຽນວິສາຫະກິດ ແລະ ໃບອະນຸຍາດໃຫ້ດຳເນີນກິດຈະການຈາກຂະແໜງການກ່ຽວຂ້ອງ — 01 ສະບັບ

**ມາດຕາ 21 ການພິຈາລະນາອະນຸມັດການອອກໃບອະນຸຍາດທາງດ້ານວິຊາການ (ໃໝ່)**

ກົມອາຫານ ແລະ ຢາ, ກະຊວງສາທາລະນະສຸກ ເປັນຜູ້ພິຈາລະນາ ແລະ ຄົ້ນຄ້ວາທາງດ້ານວິຊາການແຕ່ລະຂັ້ນ ສະເໜີເຖິງທ່ານຫົວໜ້າກົມອາຫານ ແລະ ຢາ ອອກໃບທະບຽນວິຊາການ ສຳລັບໂຮງງານອຸດສາຫະກຳ, ສຳລັບຜູ້ປະກອບການຂະໜາດນ້ອຍ ແລະ ກາງ ແມ່ນພະແນກສາທາລະນະສຸກແຂວງ ເປັນຜູ້ອອກອະນຸຍາດທະບຽນທາງດ້ານວິຊາການ. ການພິຈາລະນາອອກອະນຸຍາດມີດັ່ງນີ້:

1. ກວດກາທາງດ້ານເອກະສານ;
2. ລົງກວດສະຖານທີ່ຜະລິດຕົວຈິງ;
3. ອອກອະນຸຍາດທາງວິຊາການ.

**ມາດຕາ 22 ໄລຍະເວລາການພິຈາລະນາໃບອະນຸຍາດທາງດ້ານວິຊາການ (ໃໝ່)**

- ໄລຍະເວລາຂອງການພິຈາລະນາ ແລະ ຄົ້ນຄ້ວາເອກະສານທັງໝົດຢູ່ກົມອາຫານ ແລະ ຢາ ແລະ ພະແນກສາທາລະນະສຸກແຂວງ ແມ່ນພາຍໃນ 45 ວັນ ລັດຖະການ ພາຍຫຼັງໄດ້ຮັບເອກະສານຄົບຖ້ວນຕາມລະ ບຽບການກຳນົດ;
- ໃບອະນຸຍາດທາງດ້ານວິຊາການມີອາຍຸນຳໃຊ້ 02 ປີ, ກ່ອນຈະໝົດອາຍຸການນຳໃຊ້ 03 ເດືອນ ຕ້ອງປະກອບເອກະສານເພື່ອຕໍ່ອາຍຸຄືນໃໝ່ ພ້ອມທັງເສຍຄ່າທຳນຽມ.

**ມາດຕາ 23 ການຍົກເລີກທາງດ້ານວິຊາການ (ໃໝ່)**

- ວິຊາການເສຍຊີວິດ ບໍ່ສາມາດຊອກວິຊາການໃໝ່ໄດ້ ພາຍໃນໄລຍະເວລາ 6 ເດືອນ;
- ໃນກໍລະນີຖືກກ່າວເຕືອນ ແລະ ປັບໄໝ ເກີນ 03 ຄັ້ງ;
- ໃນກໍລະນີທີ່ມີການກະທຳຜິດ ຫຼ ຝ່າຝືນຕໍ່ລະບຽບກົດໝາຍ;
- ມີການຮ້ອງຟ້ອງຈາກຜູ້ທີ່ໄດ້ຮັບຜົນກະທົບ ແລະ ຜູ້ເສຍຫາຍ ຫຼື ຖືກສານຕັດສິນ.

**ມາດຕາ 24 ການຂໍອະນຸຍາດຜະລິດທົດລອງ (ປັບປຸງ)**

ພາຍຫຼັງທີ່ກົມອາຫານ ແລະ ຢາ ແລະ ພະແນກສາທາລະນະສຸກແຂວງ ເຫັນດີອອກອະນຸຍາດທາງດ້ານວິຊາການເພື່ອດຳເນີນການຜະລິດເຄື່ອງສຳອາງແລ້ວ ໂຮງງານ ຫຼື ຜູ້ຜະລິດ ຕ້ອງປະກອບເອກະສານເພື່ອຂໍອະນຸຍາດຜະລິດທົດລອງດັ່ງນີ້:

1. ໜັງສືສະເໜີເພື່ອຂໍອະນຸຍາດຜະລິດທົດລອງ;
2. ບັນຊີລາຍການທີ່ຈະຜະລິດ;
3. ສູດຕຳລາ ທີ່ປະກອບດ້ວຍຊື່ສານເຄມີທີ່ນຳໃຊ້ເປັນສ່ວນປະສົມ, ປະລິມານ ແລະ ລະບຸໜ້າທີ່ການຂອງແຕ່ລະສານເຄມີຕ່າງໆ;
4. ຂັ້ນຕອນການຜະລິດ;
5. ວິທີການວິໄຈ (ຖ້າມີ);
6. ສະຫຼາກ.

## ໝວດທີ IV
## ການສົ່ງອອກຜະລິດຕະພັນເຄື່ອງສຳອາງ (ໃໝ່)

**ມາດຕາ 25 ການສົ່ງອອກຜະລິດຕະພັນເຄື່ອງສຳອາງ (ໃໝ່)**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງໃດໜຶ່ງທີ່ມີຈຸດປະສົງ ສົ່ງອອກຜະລິດຕະພັນເຄື່ອງສຳອາງ ຈາກ ສປປ ລາວ ຕ້ອງໄດ້ຂໍອະນຸຍາດການຈົດແຈ້ງຜະລິດຕະພັນ ຫຼື ຂໍອະນຸຍາດສົ່ງອອກ ຢູ່ກົມອາຫານ ແລະ ຢາ, ກະຊວງສາທາລະນະສຸກ ຖ້າມີການຮຽກຮ້ອງຈາກປະເທດຜູ້ນຳເຂົ້າ.
ໃບອະນຸຍາດສົ່ງອອກຜະລິດຕະພັນເຄື່ອງສຳອາງ ແມ່ນອອກໂດຍກົມອາຫານ ແລະ ຢາ, ກະຊວງສາທາລະນະສຸກ.

**ມາດຕາ 26 ເງື່ອນໄຂຂອງການອະນຸຍາດສົ່ງອອກ (ໃໝ່)**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງໃດໜຶ່ງ ທີ່ໄດ້ຮັບອະນຸຍາດໃຫ້ດຳເນີນທຸລະກິດຈາກ ກົມອາຫານ ແລະ ຢາ, ກະຊວງສາທາລະນະສຸກ ເຊິ່ງມີເງື່ອນໄຂດັ່ງນີ້:

1. ຜະລິດຕະພັນເຄື່ອງສຳອາງ ຕ້ອງໄດ້ຮັບການຈົດແຈ້ງ;

2. ໃບອະນຸຍາດສົ່ງອອກຈາກກົມອາຫານ ແລະ ຢາ ກະຊວງສາທາລະນະສຸກ;
3. ສອດຄ່ອງກັບເງື່ອນໄຂ ແລະ ຂໍ້ຮຽກຮ້ອງຂອງປະເທດປາຍທາງ.

### ມາດຕາ 27 ການປະກອບເອກະສານເພື່ອຂໍໃບອະນຸຍາດສົ່ງອອກ (ໃໝ່)

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງໃດໜຶ່ງ ທີ່ມີຈຸດປະສົງຂໍອະນຸຍາດສົ່ງອອກ ຕ້ອງປະກອບເອກະສານ ດັ່ງລຸ່ມນີ້:

| | | |
|---|---|---|
| 1. | ໜັງສືສະເໜີຂອງບໍລິສັດ/ໂຮງງານ | 01 ສະບັບ |
| 2. | ສຳເນົາໃບຢັ້ງຢືນການຈົດແຈ້ງ ທີ່ຍັງມີອາຍຸນຳໃຊ້ | 01 ສະບັບ |
| 3. | ໃບແຈ້ງລາຄາສິນຄ້າ | 03 ສະບັບ |
| 4. | ໃບແຈ້ງລາຍລະອຽດການບັນຈຸຫຸ້ມຫໍ່ | 03 ສະບັບ |
| 5. | ໃບມອບສິດຂອງບໍລິສັດ/ໂຮງງານ ໃນກໍລະນີທີ່ຜູ້ຜະລິດ ແລະ ສົ່ງອອກບໍ່ແມ່ນຜູ້ດຽວກັນ | 01 ສະບັບ |

### ມາດຕາ 28 ການອອກໃບອະນຸຍາດສົ່ງອອກ (ໃໝ່)

1. ກົມອາຫານ ແລະ ຢາ, ກະຊວງສາທາລະນະສຸກ ຈະອອກໃບອະນຸຍາດສົ່ງອອກ ພາຍໃນ 03 ວັນ ລັດຖະການ ພາຍຫຼັງໄດ້ຮັບເອກະສານຖືກຕ້ອງ ແລະ ຄົບຖ້ວນຕາມລະບຽບການກຳນົດ;
2. ໃບອະນຸຍາດສົ່ງອອກແມ່ນໃຊ້ໄດ້ຄັ້ງດຽວ ພາຍໃນໄລຍະເວລາຂອງປີທີ່ອອກອະນຸຍາດສົ່ງອອກ;
3. ໃນກໍລະນີໃບອະນຸຍາດໝົດອາຍຸ ແຕ່ຍັງບໍ່ໄດ້ສົ່ງອອກ ແມ່ນສາມາດຕໍ່ໄດ້ອີກໜຶ່ງຄັ້ງ ພາຍໃນ 10 ວັນ ລັດຖະການ ພາຍຫຼັງໃບຢັ້ງຢືນສົ່ງອອກຜະລິດຕະພັນເຄື່ອງສຳອາງໄດ້ໝົດອາຍຸ ແລະ ມີອາຍຸການນຳໃຊ້ໄດ້ 30 ວັນ ລັດຖະການ.

## ໝວດທີ V
## ການນຳເຂົ້າຜະລິດຕະພັນເຄື່ອງສຳອາງ (ໃໝ່)

### ມາດຕາ 29 ການນຳເຂົ້າຜະລິດຕະພັນເຄື່ອງສຳອາງ (ປັບປຸງ)

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງໃດໜຶ່ງທີ່ມີຈຸດປະສົງຢາກດຳເນີນທຸລະກິດກ່ຽວກັບການ ນຳເຂົ້າຜະລິດຕະພັນເຄື່ອງສຳອາງ ເພື່ອມາຈຳໜ່າຍຢູ່ໃນ ສປປ ລາວ ຕ້ອງໄດ້ຈົດແຈ້ງຜະລິດຕະພັນ ຢູ່ກົມອາຫານ ແລະ ຢາ, ກະຊວງສາທາລະນະສຸກ ເສຍກ່ອນ.

ຜູ້ນຳເຂົ້າຜະລິດຕະພັນເຄື່ອງສຳອາງ ຕ້ອງມີຫ້ອງການ, ສາງ ແລະ ສິ່ງອຳນວຍຄວາມສະດວກ ໃນການເກັບຮັກສາ ແລະ ຂົນສົ່ງຜະລິດຕະພັນ ໃຫ້ຢູ່ໃນສະພາບດີ ເພື່ອຮັບປະກັນຄຸນນະພາບ ແລະ ຄວາມປອດໄພຕໍ່ຜູ້ຊົມໃຊ້.

ໃບອະນຸຍາດນຳເຂົ້າຜະລິດຕະພັນເຄື່ອງສຳອາງ ແມ່ນອອກໂດຍພະແນກສາທາລະນະສຸກແຂວງ/ນະຄອນຫຼວງວຽງຈັນ ສຳລັບບ່ອນທີ່ມີທີ່ຕັ້ງຂອງບໍລິສັດກ່ຽວຂ້ອງ ໃນການນຳເຂົ້າຜະລິດຕະພັນ ແລະ ມີເປົ້າໝາຍການຂົນສົ່ງຜ່ານດ່ານໃນທີ່ຕັ້ງຂອງພາກສ່ວນທີ່ອອກອະນຸຍາດ.

### ມາດຕາ 30 ເງື່ອນໄຂຂອງການອະນຸຍາດນຳເຂົ້າ (ໃໝ່)

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງທີ່ມີຈຸດປະສົງນຳເຂົ້າຜະລິດຕະພັນເຄື່ອງສຳອາງ ໃນ ສປປ ລາວ ເຊິ່ງມີເງື່ອນໄຂ ດັ່ງນີ້:

1. ເປັນຜະລິດຕະພັນເຄື່ອງສຳອາງ ທີ່ໄດ້ຮັບການຈົດແຈ້ງນຳກົມອາຫານ ແລະ ຢາ, ກະຊວງສາທາລະນະສຸກ;

2. ມີໃບຢັ້ງຢືນການຈົດແຈ້ງທີ່ຍັງມີອາຍຸການນຳໃຊ້;
3. ຕ້ອງຮັບປະກັນວ່າ ຜະລິດຕະພັນເຄື່ອງສຳອາງທີ່ນຳເຂົ້າມາຮອດ ສປປ ລາວ ຕ້ອງມີອາຍຸການນຳໃຊ້ຢ່າງນ້ອຍ 70% ຂຶ້ນໄປ, ມີຄຸນນະພາບ ແລະ ມີຄວາມປອດໄພ;
4. ມີສະຖານທີ່ເໝາະສົມໃນການເກັບຮັກສາ ແລະ ແຈກຢາຍຜະລິດຕະພັນເຄື່ອງສຳອາງຕາມມາດຕະຖານທີ່ໄດ້ກຳນົດໄວ້ເຊັ່ນ: ສາງທີ່ຮັບປະກັນຄຸນນະພາບ ແລະ ຄວາມປອດໄພຂອງຜະລິດຕະພັນ;
5. ມີລະບົບຕິດຕາມ ເພື່ອເກັບຄືນຜະລິດຕະພັນເຄື່ອງສຳອາງ ໃນກໍລະນີທີ່ພົບວ່າບໍ່ປອດໄພຕໍ່ຜູ້ຊົມໃຊ້ ພາຍຫຼັງທີ່ໄດ້ວາງຈຳໜ່າຍແລ້ວ.

**ມາດຕາ 31 ການປະກອບເອກະສານເພື່ອຂໍໃບອະນຸຍາດນຳເຂົ້າ (ໃໝ່)**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງໃດໜຶ່ງ ທີ່ມີຈຸດປະສົງຂໍອະນຸຍາດນຳເຂົ້າ ຕ້ອງປະກອບເອກະສານ ດັ່ງລຸ່ມນີ້:

| | |
|---|---|
| 1. ໜັງສືສະເໜີຂອງບໍລິສັດ/ໂຮງງານ | 01 ສະບັບ |
| 2. ສຳເນົາໃບຢັ້ງຢືນການຈົດແຈ້ງ ທີ່ຍັງມີອາຍຸນຳໃຊ້ | 01 ສະບັບ |
| 3. ໃບແຈ້ງລາຄາສິນຄ້າ | 03 ສະບັບ |
| 4. ໃບແຈ້ງລາຍລະອຽດການບັນຈຸຫຸ້ມຫໍ່ | 03 ສະບັບ |
| 5. ໃບຢັ້ງຢືນການວິໄຈ | 01 ສະບັບ |

ການປະກອບເອກະສານເພື່ອຂໍໃບອະນຸຍາດນຳເຂົ້າຜະລິດຕະພັນເຄື່ອງສຳອາງ ຍັງສາມາດຍື່ນທາງລະບົບອີເລັກໂຕຼນິກ.

**ມາດຕາ 32 ການອອກໃບອະນຸຍາດນຳເຂົ້າ (ໃໝ່)**

1. ພະແນກສາທາລະນະສຸກແຂວງ/ນະຄອນຫຼວງວຽງຈັນ ຈະອອກໃບອະນຸຍາດນຳເຂົ້າພາຍໃນ 03 ວັນ ລັດຖະການພາຍຫຼັງໄດ້ຮັບເອກະສານຖືກຕ້ອງ ແລະ ຄົບຖ້ວນຕາມລະບຽບການກຳນົດ;
2. ໃບອະນຸຍາດນຳເຂົ້າແມ່ນໃຊ້ໄດ້ຄັ້ງດຽວ ພາຍໃນໄລຍະເວລາຂອງປີ ທີ່ອອກອະນຸຍາດນຳເຂົ້າ;
3. ໃນກໍລະນີທີ່ໃບອະນຸຍາດບໍ່ໄດ້ຖືກນຳໃຊ້ໃນປີທີ່ອອກອະນຸຍາດ ແມ່ນບໍ່ສາມາດຕໍ່ອາຍຸໄດ້ ແລະ ຕ້ອງຂໍອະນຸຍາດໃໝ່.

## ໝວດທີ VI
## ການນຳເຂົ້າຊົ່ວຄາວຜະລິດຕະພັນເຄື່ອງສຳອາງ (ໃໝ່)

**ມາດຕາ 33 ການນຳເຂົ້າຊົ່ວຄາວຜະລິດຕະພັນເຄື່ອງສຳອາງ (ປັບປຸງ)**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງໃດໜຶ່ງທີ່ມີຈຸດປະສົງຢາກດຳເນີນທຸລະກິດກ່ຽວກັບການ ນຳເຂົ້າຊົ່ວຄາວຜະລິດຕະພັນເຄື່ອງສຳອາງ ຢູ່ໃນ ສປປ ລາວ ຕ້ອງໄດ້ຂໍອະນຸຍາດພະແນກສາທາລະນະສຸກແຂວງ/ນະຄອນຫຼວງວຽງຈັນສຳລັບບ່ອນທີ່ມີທີ່ຕັ້ງຂອງບໍລິສັດ/ໂຮງງານກ່ຽວຂ້ອງໃນການນຳເຂົ້າຜະລິດຕະພັນ ແລະ ມີເປົ້າໝາຍການຂົນສົ່ງຜ່ານດ່ານ ໃນທີ່ຕັ້ງຂອງພາກສ່ວນທີ່ອອກອະນຸຍາດ.

**ມາດຕາ 34 ເງື່ອນໄຂຂອງການອະນຸຍາດ ນຳເຂົ້າຊົ່ວຄາວ (ໃໝ່)**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ມີຈຸດປະສົງ ນຳເຂົ້າຊົ່ວຄາວ ໃນ ສປປ ລາວ ຕ້ອງມີເງື່ອນໄຂດັ່ງນີ້:

1. ຕ້ອງຮັບປະກັນຄວາມປອດໄພ ແລະ ຫຼີກລ້ຽງການຕົກເຮ່ຍເສຍຫາຍ ຕະຫຼອດໄລຍະທີ່ດຳເນີນການ;
2. ມີສະຖານທີ່ເໝາະສົມໃນການເກັບຮັກສາເຊັ່ນ: ສາງທີ່ຮັບປະກັນຄຸນນະພາບ ແລະ ຄວາມປອດໄພຂອງຜະລິດຕະພັນ ລວມທັງບໍ່ສ້າງຜົນກະທົບຕໍ່ສິ່ງແວດລ້ອມ ແລະ ສັງຄົມ;

3. ມີລະບົບຕິດຕາມທີ່ເໝາະສົມ ເພື່ອສົ່ງອອກຄືນຜະລິດຕະພັນເຄື່ອງສຳອາງ;
4. ແຈ້ງເປົ້າໝາຍຂອງການສົ່ງຕໍ່ (ປາຍທາງ).

**ມາດຕາ 35 ການປະກອບເອກະສານເພື່ອຂໍໃບອະນຸຍາດນຳເຂົ້າຊົ່ວຄາວ (ໃໝ່)**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງໃດໜຶ່ງ ທີ່ມີຈຸດປະສົງຂໍອະນຸຍາດນຳເຂົ້າຊົ່ວຄາວ ຕ້ອງປະກອບເອກະສານດັ່ງລຸ່ມນີ້:

| | |
|---|---|
| 1. ໜັງສືສະເໜີຂອງບໍລິສັດ/ໂຮງງານ | 01 ສະບັບ |
| 2. ໃບແຈ້ງລາຄາສິນຄ້າ | 03 ສະບັບ |
| 3. ໃບແຈ້ງລາຍລະອຽດການບັນຈຸຫຸ້ມຫໍ່ | 03 ສະບັບ |
| 4. ໃບທະບຽນວິສາຫະກິດ ແລະ ໃບອະນຸຍາດໃຫ້ດຳເນີນກິດຈະການ ຈາກຂະແໜງການກ່ຽວຂ້ອງ | 01 ສະບັບ |

**ມາດຕາ 36 ການອອກໃບອະນຸຍາດນຳເຂົ້າຊົ່ວຄາວ (ໃໝ່)**

1. ພະແນກສາທາລະນະສຸກແຂວງ/ນະຄອນຫຼວງວຽງຈັນ ອອກໃບອະນຸຍາດນຳເຂົ້າຊົ່ວຄາວພາຍໃນ 03 ວັນລັດຖະການ ພາຍຫຼັງທີ່ໄດ້ຮັບເອກະສານຖືກຕ້ອງ ແລະ ຄົບຖ້ວນຕາມລະບຽບການກຳນົດ;
2. ໃບອະນຸຍາດນຳເຂົ້າຊົ່ວຄາວ ແມ່ນໃຊ້ໄດ້ຄັ້ງດຽວ ພາຍໃນໄລຍະເວລາທີ່ກຳນົດ.

## ໝວດທີ VII
## ການສົ່ງຜ່ານຜະລິດຕະພັນເຄື່ອງສຳອາງ (ໃໝ່)

**ມາດຕາ 37 ການສົ່ງຜ່ານຜະລິດຕະພັນເຄື່ອງສຳອາງ (ໃໝ່)**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງໃດໜຶ່ງທີ່ມີຈຸດປະສົງຢາກດຳເນີນທຸລະກິດກ່ຽວກັບການ ສົ່ງຜ່ານຜະລິດຕະພັນເຄື່ອງສຳອາງ ຈາກປະເທດໃດໜຶ່ງຜ່ານ ສປປ ລາວ ໄປຫາປະເທດທີສາມ ຕ້ອງໄດ້ຮັບອະນຸຍາດຈາກພະແນກສາທາລະນະສຸກແຂວງ/ນະຄອນຫຼວງວຽງຈັນ ຕາມການມອບໝາຍ ແລະ ຈາກຂະແໜງການທີ່ກ່ຽວຂ້ອງ ຕາມລະບຽບການຂອງ ສປປ ລາວ.

**ມາດຕາ 38 ເງື່ອນໄຂຂອງການອະນຸຍາດສົ່ງຜ່ານ (ໃໝ່)**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງໃດໜຶ່ງ ທີ່ມີຈຸດປະສົງ ສົ່ງຜ່ານຜະລິດຕະພັນເຄື່ອງສຳອາງ ໃນ ສປປ ລາວ ມີເງື່ອນໄຂດັ່ງນີ້:

1. ຕ້ອງແຈ້ງເອກະສານການສົ່ງອອກຂອງປະເທດຕົ້ນທາງ ແລະ ເອກະສານນຳເຂົ້າຂອງປະເທດປາຍທາງ ຕໍ່ເຈົ້າໜ້າທີ່ກວດກາອາຫານ ແລະ ຢາ ປະຈຳດ່ານ;
2. ຕ້ອງປິດ ແລະ ຕີຕາປະທັບໃສ່ຕູ້ບັນຈຸສິນຄ້າ ແລະ ຕ້ອງປະຕິບັດຕາມເງື່ອນໄຂການຂົນສົ່ງຜ່ານແດນ;
3. ໃນກໍລະນີທີ່ມີການຄ່ຽນຖ່າຍສິນຄ້າໃສ່ລົດບັນທຸກອື່ນ ຫຼື ລົງສາງກ່ອນການສົ່ງຜ່ານນັ້ນ ຕ້ອງມີການກວດກາຢັ້ງຢືນຈາກເຈົ້າໜ້າທີ່ກວດກາອາຫານ ແລະ ຢາ ກ່ຽວກັບຈຳນວນ ແລະ ຊະນິດສິນຄ້າຕາມທີ່ໄດ້ແຈ້ງໄວ້ ເພື່ອສົ່ງຜ່ານໄປຍັງປະເທດທີສາມ ພ້ອມທັງເອກະສານບັນທຶກ ແລະ ແຈ້ງໄປຍັງດ່ານຂາອອກ ທີ່ສິນຄ້າດັ່ງກ່າວຈະຜ່ານໄປ;
4. ຕ້ອງຮັບປະກັນຄວາມປອດໄພ ແລະ ບໍ່ມີຜົນກະທົບຕໍ່ສຸຂະພາບຂອງຄົນ, ສັດ ແລະ ສິ່ງແວດລ້ອມ.

**ມາດຕາ 39 ການປະກອບເອກະສານເພື່ອຂໍອະນຸຍາດສົ່ງຜ່ານ (ໃໝ່)**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງໃດໜຶ່ງ ທີ່ມີຈຸດປະສົງ ສົ່ງຜ່ານຜະລິດຕະພັນເຄື່ອງສຳອາງ ໃນ ສປປ ລາວ ຕ້ອງປະກອບເອກະສານດັ່ງນີ້:

1. ເອກະສານຢັ້ງຢືນການສົ່ງອອກຂອງປະເທດຕົ້ນທາງ 01 ສະບັບ
2. ໃບຢັ້ງຢືນການນຳເຂົ້າ ຫຼື ໃບແຈ້ງຮັບສິນຄ້າຈາກປະເທດປາຍທາງ (ເປັນພາສາອັງກິດ) 01 ສະບັບ
3. ໃບແຈ້ງລາຍລະອຽດ ແລະ ໃບຫຸ້ມຫໍ່ 03 ສະບັບ
4. ໃບທະບຽນວິສາຫະກິດ ແລະ ໃບອະນຸຍາດໃຫ້ດຳເນີນກິດຈະການຈາກຂະແໜງການກ່ຽວຂ້ອງ 01 ສະບັບ

**ມາດຕາ 40 ການອອກໃບອະນຸຍາດສົ່ງຜ່ານ (ໃໝ່)**

1. ພະແນກສາທາລະນະສຸກແຂວງ/ນະຄອນຫຼວງວຽງຈັນ ຈະອອກໃບອະນຸຍາດສົ່ງຜ່ານພາຍໃນ 03 ວັນ ລັດຖະການ ພາຍຫຼັງໄດ້ຮັບເອກະສານຖືກຕ້ອງ ແລະ ຄົບຖ້ວນຕາມລະບຽບການກຳນົດ;
2. ໃບອະນຸຍາດສົ່ງຜ່ານແມ່ນໃຊ້ໄດ້ຄັ້ງດຽວເທົ່ານັ້ນ.

**ມາດຕາ 41 ການກຳນົດດ່ານ ແລະ ໄລຍະເວລາການສົ່ງຜ່ານ (ໃໝ່)**

1. ຕ້ອງດຳເນີນຜ່ານດ່ານສາກົນຂອງ ສປປ ລາວ ເທົ່ານັ້ນໂດຍອີງຕາມລະບຽບການກຳນົດ ໃນແຕ່ລະໄລຍະ ລວມທັງຜ່ານດ່ານສາກົນ ຕາມລະບຽບການຂອງປະເທດປາຍທາງ;
2. ຜູ້ປະກອບການຜະລິດຕະພັນເຄື່ອງສຳອາງ ຕ້ອງລະບຸຊື່ດ່ານຢ່າງຈະແຈ້ງ ແລະ ຊັດເຈນໃນເວລາປະກອບເອກະສານ ແລະ ຕ້ອງສອດຄ່ອງ ກັບຂໍ້ 1;
3. ໄລຍະເວລາໃນການສົ່ງຜ່ານແມ່ນບໍ່ເກີນ 03 ວັນ.

## ໝວດທີ VIII
## ມາດຕະຖານ ແລະ ການຮັບປະກັນຄຸນນະພາບຂອງຜະລິດຕະພັນເຄື່ອງສຳອາງ (ໃໝ່)

**ມາດຕາ 42 ມາດຕະຖານຂອງຜະລິດຕະພັນເຄື່ອງສຳອາງ (ໃໝ່)**

ຜະລິດຕະພັນເຄື່ອງສຳອາງ ຕ້ອງປະຕິບັດຕາມມາດຕະຖານຂອງກະຊວງສາທາລະນະສຸກ ແລະ ສອດຄ່ອງກັບລະບຽບການເຄື່ອງສຳອາງອາຊຽນ (ມີເອກະສານຊ້ອນທ້າຍ).

ຜູ້ທີ່ຈົດແຈ້ງ ມີໜ້າທີ່ຕິດຕາມກວດກາຄຸນນະພາບ ຜະລິດຕະພັນເຄື່ອງສຳອາງຂອງຕົນ ຫຼັງການວາງຈຳໜ່າຍ ແລະ ເກັບຮັກສາຂໍ້ມູນ ຫຼື ເອກະສານທີ່ກ່ຽວຂ້ອງຂອງຜະລິດຕະພັນໄວ້ ເພື່ອເປັນຂໍ້ມູນໃນເວລາເຈົ້າໜ້າທີ່ລົງຕິດຕາມ ແລະ ກວດກາ.

**ມາດຕາ 43 ການຮັບປະກັນຄວາມປອດໄພ (ໃໝ່)**

ການອະນຸມັດຈົດແຈ້ງ, ຜະລິດທົດລອງເຄື່ອງສຳອາງທີ່ມີຄວາມສ່ຽງສູງ, ການຈຳໜ່າຍ ແລະ ກ່າວອ້າງຄຸນປະໂຫຍດຜະລິດຕະພັນເຄື່ອງສຳອາງ ຕ້ອງໄດ້ຮັບການວິໄຈຄຸນນະພາບເສຍກ່ອນ ເພື່ອຮັບປະກັນຄວາມປອດໄພ ໂດຍອີງຕາມວິທີວິໄຈທີ່ກຳນົດໂດຍກະຊວງສາທາລະນະສຸກ ຫຼື ລະບຽບການເຄື່ອງສຳອາງອາຊຽນ ເຊິ່ງຄ່າໃຊ້ຈ່າຍທັງໝົດແມ່ນຄວາມຮັບຜິດຊອບຂອງຜູ້ຈົດແຈ້ງ.

**ມາດຕາ 44 ການກ່າວອ້າງຄຸນປະໂຫຍດຂອງຜະລິດຕະພັນ (ໃໝ່)**

ຂໍ້ມູນທີ່ກ່າວອ້າງຄຸນປະໂຫຍດຜະລິດຕະພັນເຄື່ອງສຳອາງ ເຊິ່ງຂໍ້ມູນດັ່ງກ່າວຕ້ອງໄດ້ຜ່ານການ ພິສູດຄວາມຈິງທາງດ້ານວິທະຍາສາດ ໂດຍອີງຕາມສູດຕຳລາທີ່ໄດ້ຜ່ານການປຸງແຕ່ງສະໜອງ ໃຫ້ແກ່ກົມອາຫານ ແລະ ຢາ, ກະຊວງສາທາລະນະສຸກ. (ມີຄູ່ມືແນະນຳ)

**ມາດຕາ 45 ການປະເມີນຜົນກະທົບຂອງຜະລິດຕະພັນຕໍ່ສຸຂະພາບ (ໃໝ່)**

ບຸກຄົນ, ນິຕິບຸກຄົນ ທີ່ຮັບຜິດຊອບຕໍ່ການຜະລິດ, ນຳເຂົ້າ ແລະ ຈຳໜ່າຍຜະລິດຕະພັນເຄື່ອງສຳອາງໃນ ສປປ ລາວ ຕ້ອງສະໜອງຂໍ້ມູນຄວາມປອດໄພ ເພື່ອຢັ້ງຢືນຜົນກະທົບຈາກການນຳໃຊ້ເຄື່ອງສຳອາງ ກ່ອນການວາງຈຳໜ່າຍໃນທ້ອງຕະຫຼາດ.

ຜະລິດຕະພັນ ທີ່ໄດ້ຮັບການຈົດແຈ້ງຈາກກົມອາຫານ ແລະ ຢາ, ກະຊວງສາທາລະນະສຸກ ເມື່ອນຳເຂົ້າມາຈຳໜ່າຍໃນ ສປປ ລາວ ຕ້ອງໄດ້ຕິດຕາມ ແລະ ເກັບກຳຂໍ້ມູນ. ໃນກໍລະນີທີ່ມີຜູ້ຊົມໃຊ້ຫາກໄດ້ຮັບຜົນກະທົບຕໍ່ສຸຂະພາບ ຈາກການນຳໃຊ້ຜະລິດຕະພັນເຄື່ອງສຳອາງ ເມື່ອນຳໃຊ້ໃນເງື່ອນໄຂທຳມະດາ ຫຼື ໃຊ້ຢ່າງລົມເຫດລົມຜົນຕາມການກຳນົດໄວ້ ຕ້ອງໄດ້ລາຍງານມາຍັງກົມອາຫານ ແລະ ຢາ ໃຫ້ຮັບຊາບຢ່າງທັນການ. (ມີຄູ່ມືແນະນຳການລາຍງານຜົນກະທົບຕໍ່ສຸຂະພາບ).

**ມາດຕາ 46 ຄວາມຮັບຜິດຊອບຂອງຜູ້ປະກອບການ (ໃໝ່)**

ຜູ້ປະກອບການຜະລິດຕະພັນເຄື່ອງສຳອາງ ຕ້ອງຮັບຜິດຊອບຕໍ່ໜ້າກົດໝາຍ ໃນກໍລະນີທີ່ເກີດຄວາມເສຍຫາຍຕໍ່ຜູ້ຊົມໃຊ້ ທີ່ເນື່ອງມາຈາກຜະລິດຕະພັນເຄື່ອງສຳອາງບໍ່ມີຄຸນນະພາບ, ບໍ່ໄດ້ມາດຕະຖານ, ບໍ່ມີຄວາມປອດໄພ, ມີຜົນກະທົບຕໍ່ສຸຂະພາບ, ຊີວິດ ແລະ ຊັບສິນ ຊຶ່ງຕົນໄດ້ສະໜອງ ແລະ ຕ້ອງຮັບຜິດຊອບຄ່າເສຍຫາຍທັງໝົດ ທີ່ເກີດຈາກຄວາມຜິດຂອງຕົນໃນການດຳເນີນທຸລະກິດຜະລິດຕະພັນເຄື່ອງສຳອາງ.

**ມາດຕາ 47 ການປະເມີນຄວາມປອດໄພ (ໃໝ່)**

ຜະລິດຕະພັນເຄື່ອງສຳອາງທີ່ຈະນຳມາຈົດແຈ້ງ ຕ້ອງໄດ້ຮັບການປະເມີນຄວາມປອດໄພຂອງວັດຖຸດິບ ແລະ ສ່ວນປະກອບທີ່ໃຊ້ປຸງແຕ່ງ ເພື່ອເປັນຂໍ້ມູນອ້າງອີງໃນການຢັ້ງຢືນຄວາມປອດໄພຂອງຜະລິດຕະພັນ. (ມີຄູ່ມືແນະນຳ)

**ມາດຕາ 48 ການກຳນົດຄວາມສ່ຽງຂອງຜະລິດຕະພັນເຄື່ອງສຳອາງ (ໃໝ່)**

ກົມອາຫານ ແລະ ຢາ, ກະຊວງສາທາລະນະສຸກ ເປັນຜູ້ກຳນົດລາຍການເຄື່ອງສຳອາງທີ່ມີຄວາມສ່ຽງ ໂດຍອີງຕາມຄວາມອັນຕະລາຍຂອງບໍລິເວນທີ່ນຳໃຊ້ ແລະ ສານທີ່ນຳໃຊ້ໃນເຄື່ອງສຳອາງ ທີ່ສົ່ງຜົນສະທ້ອນຕໍ່ສຸຂະພາບ ແນໃສ່ສ້າງມາດຕະຖານການຄວບຄຸມ ແລະ ຄຸ້ມຄອງຜະລິດຕະພັນເຄື່ອງສຳອາງ ຢ່າງມີປະສິດທິຜົນ ເຊິ່ງໄດ້ກຳນົດໄວ້ໃນລະບຽບການ.

ຄວາມສ່ຽງຂອງຜະລິດຕະພັນເຄື່ອງສຳອາງ ແບ່ງອອກເປັນ 3 ປະເພດຄື:

- ຄວາມສ່ຽງລະດັບສູງ: ບັນດາຜະລິດຕະພັນທີ່ສຳຜັດກັບບໍລິເວນຮອບດວງຕາ, ປາກ, ຜົ້ງປາກ, ຈຸດລີ້ລັບ ເຊິ່ງສາມາດດູດຊຶມຜ່ານເຂົ້າສູ່ຜິວໜັງ ແລະ ມີສ່ວນປະກອບຂອງສານທີ່ຈຳກັດປະລິມານໃຊ້;
- ຄວາມສ່ຽງລະດັບປານກາງ: ບັນດາຜະລິດຕະພັນທີ່ສຳຜັດກັບຜິວໜັງ ເຊິ່ງສາມາດດູດຊຶມຜ່ານເຂົ້າສູ່ຜິວໜັງ ແລະ ມີສ່ວນປະກອບຂອງສານທີ່ຈຳກັດປະລິມານໃຊ້;
- ຄວາມສ່ຽງລະດັບຕໍ່າ: ບັນດາຜະລິດຕະພັນທີ່ສຳຜັດກັບຜິວໜັງ ເຊິ່ງບໍ່ສາມາດດູດຊຶມຜ່ານເຂົ້າສູ່ຜິວໜັງ ແລະ ມີສ່ວນປະກອບຂອງສານທີ່ຈຳກັດປະລິມານໃຊ້. (ມີບັນຊີລະອຽດຄັດຕິດ)

### ມາດຕາ 49 ບັນຊີສານເຄມີສໍາລັບຜະລິດຕະພັນເຄື່ອງສໍາອາງ (ໃໝ່)

ກະຊວງສາທາລະນະສຸກ ເປັນຜູ້ກໍານົດບັນຊີບັນດາສານ ຫຼື ສ່ວນປະກອບຕ່າງໆທີ່ນໍາໃຊ້, ຈໍາກັດປະລິມານນໍາໃຊ້ ແລະ ຫ້າມນໍາໃຊ້ ເປັນສ່ວນປະສົມໃນສູດຕໍາລາເຄື່ອງສໍາອາງ ຕາມສະບັບປະກາດໃຊ້ຂອງ ສປປ ລາວ ທີ່ສອດຄ່ອງກັບລະບຽບການເຄື່ອງສໍາອາງອາຊຽນ ສະບັບປັບປຸງຄັ້ງລ້າສຸດ ເຊິ່ງປະກອບດ້ວຍ 5 ເອກະສານຊ້ອນທ້າຍມີດັ່ງນີ້:

1. ເອກະສານຊ້ອນທ້າຍ II ແມ່ນບັນຊີສານເຄມີອັນຕະລາຍ ທີ່ຫ້າມໃຊ້ເປັນສ່ວນປະສົມ;
2. ເອກະສານຊ້ອນທ້າຍ III ແມ່ນບັນຊີສານເຄມີ ທີ່ອະນຸຍາດໃຫ້ນໍາໃຊ້ ແຕ່ຈໍາກັດປະລິມານ;
3. ເອກະສານຊ້ອນທ້າຍ IV ແມ່ນບັນຊີສານແຕ່ງສີ ທີ່ອະນຸຍາດໃຫ້ນໍາໃຊ້;
4. ເອກະສານຊ້ອນທ້າຍ VI ແມ່ນບັນຊີສານກັນບູດ ທີ່ອະນຸຍາດໃຫ້ນໍາໃຊ້ ແຕ່ຈໍາກັດປະລິມານ;
5. ເອກະສານຊ້ອນທ້າຍ VII ແມ່ນບັນຊີສານກັນແດດທີ່ອະນຸຍາດໃຫ້ນໍາໃຊ້ ແຕ່ຈໍາກັດປະລິມານ.
   (ມີເອກະສານຊ້ອນທ້າຍ)

### ມາດຕາ 50 ວິທີການວິໄຈ (ໃໝ່)

ວິທີການວິໄຈ ແມ່ນອີງໃສ່ວິທີວິໄຈພາຍໃນ ທີ່ສອດຄ່ອງຕາມມາດຕະຖານຂອງພາກພື້ນ ແລະ ສາກົນ.
ການຢັ້ງຢືນຄຸນນະພາບຂອງຜະລິດຕະພັນເຄື່ອງສໍາອາງ ແມ່ນອີງຕາມຜົນວິໄຈຂອງສູນວິໄຈອາຫານ ແລະ ຢາ ຫຼື ຫ້ອງວິເຄາະອື່ນທັງພາຍໃນ ແລະ ຕ່າງປະເທດ ທີ່ໄດ້ຖືກຮັບຮອງຈາກກະຊວງສາທາລະນະສຸກ.

### ມາດຕາ 51 ການປະກອບເອກະສານ ເພື່ອຂໍອະນຸຍາດວິໄຈຄຸນນະພາບ (ໃໝ່)

ພາຍຫຼັງທີ່ກົມອາຫານ ແລະ ຢາ, ກະຊວງສາທາລະນະສຸກ ເຫັນດີໃຫ້ມີການຜະລິດທົດລອງແລ້ວ ໂຮງງານ ຫຼື ຜູ້ຜະລິດຕ້ອງປະກອບເອກະສານເພື່ອຂໍອະນຸຍາດວິໄຈຄຸນນະພາບ ພ້ອມທັງຮັບຜິດຊອບຄ່າໃຊ້ຈ່າຍທັງໝົດໃນການວິໄຈ ດັ່ງລາຍລະອຽດລຸ່ມນີ້:

1. ໜັງສືສະເໜີ;
2. ຜະລິດຕະພັນເຄື່ອງສໍາອາງຕົວຢ່າງ.

## ໝວດທີ IX
## ສະຫຼາກຜະລິດຕະພັນເຄື່ອງສໍາອາງ (ໃໝ່)

### ມາດຕາ 52 ສະຫຼາກຜະລິດຕະພັນເຄື່ອງສໍາອາງ (ໃໝ່)

ຜະລິດຕະພັນເຄື່ອງສໍາອາງ ທີ່ອະນຸຍາດໃຫ້ວາງຈໍາໜ່າຍໃນ ສປປ ລາວ ຕ້ອງຕິດສະຫຼາກທີ່ຖືກຕ້ອງ, ເນື້ອໃນສະຫຼາກຕ້ອງປະກອບມີຂໍ້ມູນພື້ນຖານດັ່ງລຸ່ມນີ້:

1. ເນື້ອໃນທີ່ກໍານົດຢູ່ໃນສະຫຼາກຕ້ອງເປັນພາສາລາວ ແລະ ສາກົນ ຫຼື ພາສາລາວ ແລະ ພາສາຂອງປະເທດຕົ້ນທາງ, ຕົວໜັງສືເຫັນແຈ້ງຊັດເຈນ, ອ່ານອອກງ່າຍ ພ້ອມທັງລະບຸລາຍລະອຽດຄົບຖ້ວນ ແລະ ມີຄວາມຈິງ;
2. ເຄື່ອງໝາຍການຄ້າ, ຮູບ ຫຼື ເຄື່ອງໝາຍອື່ນໆຕ້ອງສອດຄ່ອງ ກັບຄຸນລັກສະນະຂອງຜະລິດຕະພັນ, ສອດຄ່ອງດ້ານວັດທະນາທໍາຂອງ ສປປ ລາວ ເພື່ອຫຼີກລ້ຽງຄວາມເຂົ້າໃຈຜິດ ແລະ ຫຼອກລວງຜູ້ຊົມໃຊ້.

### ມາດຕາ 53 ເນື້ອໃນສະຫຼາກ (ປັບປຸງ)

ສະຫຼາກຂອງຜະລິດຕະພັນເຄື່ອງສຳອາງທີ່ຈະຂໍຈົດແຈ້ງຕ້ອງມີເນື້ອໃນຄົບຖ້ວນເປັນພາສາລາວ ແລະ ສາກົນ ຫຼື ພາສາລາວ ແລະ ພາສາຂອງປະເທດຕົ້ນທາງ ທີ່ອ່ານໄດ້ຊັດເຈນ ດັ່ງລາຍລະອຽດລຸ່ມນີ້:

1. ຊື່ຜະລິດຕະພັນ ແລະ ຊື່ການຄ້າ ຜະລິດຕະພັນເຄື່ອງສຳອາງ;
2. ລາຍຊື່ສານເຄມີ ທີ່ໃຊ້ເປັນສ່ວນປະກອບໃນເຄື່ອງສຳອາງ ຕ້ອງເປັນຊື່ເອກະພາບສາກົນ ເຊິ່ງຕ້ອງສອດຄ່ອງກັບສູດຕຳລາທີ່ໄດ້ຈົດແຈ້ງ ແລະ ຮຽງລຳດັບຕາມປະລິມານຂອງສານເຄມີ ແຕ່ຫຼາຍຫາໜ້ອຍ;
3. ເລກຊຸດຜະລິດ;
4. ວັນເດືອນປີຜະລິດ ແລະ ໝົດອາຍຸ ໃນກໍລະນີທີ່ມີອາຍຸການນຳໃຊ້ຕ່ຳກ່ວາ 30 ເດືອນ;
5. ຂໍ້ແນະນຳສຳລັບການນຳໃຊ້, ຄຳເຕືອນ ແລະ ຂໍ້ຫ້າມໃຊ້;
6. ຂະໜາດບັນຈຸ;
7. ຮູບແບບຂອງຜະລິດຕະພັນ;
8. ການເກັບຮັກສາ;
9. ຊື່ປະເທດຜູ້ຜະລິດ;
10. ຊື່ ແລະ ທີ່ຢູ່ໂຮງງານຜະລິດ (ຖ້າມີ);
11. ຊື່ ແລະ ທີ່ຢູ່ຂອງຜູ້ນຳເຂົ້າ (ຖ້າມີ);
12. ຊື່ ແລະ ທີ່ຢູ່ຂອງຕົວແທນຈຳໜ່າຍ (ຖ້າມີ);
13. ເລກທີຈົດແຈ້ງຈາກກົມອາຫານ ແລະ ຢາ (ຖ້າມີຈຸດປະສົງຈະໃສ່ເລກທີຈົດແຈ້ງ).

**ໝາຍເຫດ:** ໃນກໍລະນີທີ່ສະຫຼາກເປັນພາສາສາກົນ ຫຼື ພາສາປະເທດຕົ້ນທາງ ຕ້ອງມີສະຫຼາກນ້ອຍ (sticker) ເປັນພາສາລາວ ເຊິ່ງຢ່າງໜ້ອຍຕ້ອງປະຕິບັດຕາມຂໍ້ 1; 2; 4; 5; 8; 9 ແລະ 12.

### ມາດຕາ 54 ສະຫຼາກເຄື່ອງສຳອາງທີ່ສົ່ງອອກ (ໃໝ່)

ເຄື່ອງສຳອາງທີ່ສົ່ງອອກ ຫຼື ຜະລິດສະເພາະເພື່ອການສົ່ງອອກ ແມ່ນໃຫ້ມີເນື້ອໃນຕາມການກຳນົດຂອງປະເທດປາຍທາງ.

### ມາດຕາ 55 ເລກທີຈົດແຈ້ງ (ໃໝ່)

ເລກທີຈົດແຈ້ງ ແມ່ນການຢັ້ງຢືນທີ່ສະແດງໃຫ້ເຫັນວ່າ ຜະລິດຕະພັນເຄື່ອງສຳອາງທີ່ຈະຜະລິດ ຫຼື ນຳເຂົ້າແມ່ນໄດ້ຜ່ານການພິຈາລະນາຕາມຫຼັກການຄວາມຖືກຕ້ອງ ແລະ ສອດຄ່ອງຈາກກົມອາຫານ ແລະ ຢາ, ກະຊວງສາທາລະນະສຸກ.

## ໝວດທີ X
## ການບໍ່ເສຍຄ່າທົດແທນ, ການເກັບຄ່າທຳນຽມ, ຄ່າບໍລິການ ແລະ ຮ້ອງຮຽນ

### ມາດຕາ 56 ການບໍ່ເສຍຄ່າທົດແທນ (ໃໝ່)

ກະຊວງສາທາລະນະສຸກ ຫຼື ອົງການຄຸ້ມຄອງທີ່ກ່ຽວຂ້ອງຂອງລັດ ຈະບໍ່ຮັບຜິດຊອບຕໍ່ການເສຍຫາຍໃດໆ ທີ່ເກີດຈາກການອາຍັດ ຫຼື ຍຶດ, ທຳລາຍ, ການສັ່ງຢຸດກິດຈະການຊົ່ວຄາວ ຫຼື ການປິດຢ່າງຖາວອນ ເນື່ອງຈາກເຄື່ອງສຳອາງດັ່ງກ່າວ ບໍ່ຖືກຕ້ອງຕາມມາດຕະຖານ ແລະ ຄຸນນະພາບ ຫຼື ບໍ່ໄດ້ຮັບອະນຸຍາດຕາມຂໍ້ຕົກລົງສະບັບນີ້.

ຄ່າໃຊ້ຈ່າຍທີ່ເກີດຈາກການທຳລາຍເຄື່ອງສຳອາງ ທີ່ບໍ່ຖືກຕ້ອງຕາມມາດຕະຖານ ແລະ ຄຸນນະພາບ ແລະ ບໍ່ໄດ້ຮັບອະນຸຍາດ ແມ່ນຄວາມຮັບຜິດຊອບຂອງຜູ້ປະກອບການ.

**ມາດຕາ 57 ການເກັບຄ່າທຳນຽມ ແລະ ຄ່າບໍລິການ (ປັບປຸງ)**

ການເກັບຄ່າທຳນຽມ ແລະ ຄ່າບໍລິການ ທີ່ກ່ຽວຂ້ອງກັບວຽກງານຜະລິດຕະພັນເຄື່ອງສຳອາງ ແມ່ນໃຫ້ປະຕິບັດຕາມລະບຽບການ ທີ່ໄດ້ກຳນົດໄວ້ໃນລັດຖະບັນຍັດຂອງປະທານປະເທດ ສະບັບປະກາດໃຊ້ປະຈຸບັນ.

**ມາດຕາ 58 ການຮ້ອງຮຽນ (ໃໝ່)**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງໃດໜຶ່ງທີ່ບໍ່ໄດ້ຮັບຄວາມເປັນທຳຈາກການຊົມໃຊ້ຜະລິດຕະພັນເຄື່ອງສຳອາງ,

ການປະຕິບັດງານຂອງເຈົ້າໜ້າທີ່ກະຊວງສາທາລະນະສຸກ ຫຼື ອົງການຄຸ້ມຄອງທີ່ກ່ຽວຂ້ອງຂອງລັດ, ຜູ້ກ່ຽວມີສິດຍື່ນຄຳຮ້ອງຮຽນ ພ້ອມດ້ວຍເອກະສານ ແລະ ຫຼັກຖານຕ່າງໆ ທີ່ມີເຖິງຂະແໜງການທີ່ກ່ຽວຂ້ອງຕາມແຕ່ລະຂັ້ນ.

**ມາດຕາ 59 ການປະກອບເອກະສານ ເພື່ອຂໍຮ້ອງຮຽນ (ໃໝ່)**

ໃນກໍລະນີທີ່ຜູ້ຊົມໃຊ້ ບໍ່ໄດ້ຮັບຄວາມເປັນທຳຈາກການຊົມໃຊ້ຜະລິດຕະພັນເຄື່ອງສຳອາງ ທີ່ໄດ້ຮັບການຈົດແຈ້ງແລ້ວ ສາມາດປະກອບເອກະສານ ພ້ອມທັງນຳຫຼັກຖານຕ່າງໆແຈ້ງຕໍ່ກົມອາຫານ ແລະ ຢາ, ກະຊວງສາທາລະນະສຸກ ດັ່ງນີ້:

1. ໜັງສືສະເໜີ;
2. ໃບບິນຊື້ສິນຄ້າ;
3. ໃບຢັ້ງຢືນຈາກຂະແໜງສາທາລະນະສຸກ ໃນກໍລະນີທີ່ເກີດຄວາມເສຍຫາຍຕໍ່ຜູ້ຊົມໃຊ້;
4. ສຳເນົາສຳມະໂນຄົວ ຫຼື ບັດປະຈຳຕົວ;
5. ຕົວຢ່າງ ຫຼື ຮູບພາບທີ່ກ່ຽວຂ້ອງ ແລະ ອື່ນໆ.

## ໝວດທີ XI
## ການກວດກາຜະລິດຕະພັນເຄື່ອງສຳອາງ (ໃໝ່)

**ມາດຕາ 60 ການກວດກາຜະລິດຕະພັນເຄື່ອງສຳອາງ (ໃໝ່)**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງໃດໜຶ່ງ ທີ່ມີຈຸດປະສົງນຳເຂົ້າ-ສົ່ງອອກ, ນຳເຂົ້າຊົ່ວຄາວ, ສົ່ງຜ່ານ ແລະ ຈໍລະຈອນຈຳໜ່າຍ ຕ້ອງໄດ້ຮັບການກວດກາຈາກຂະແໜງສາທາລະນະສຸກທີ່ກ່ຽວຂ້ອງ.

**ມາດຕາ 61 ການກວດກາ ຜະລິດຕະພັນເຄື່ອງສຳອາງຢູ່ດ່ານ (ໃໝ່)**

ຜູ້ທີ່ໄດ້ຮັບອະນຸຍາດການນຳເຂົ້າ-ສົ່ງອອກ, ນຳເຂົ້າຊົ່ວຄາວ ແລະ ສົ່ງຜ່ານຜະລິດຕະພັນເຄື່ອງສຳອາງ ຕ້ອງແຈ້ງເອກະສານທີ່ກ່ຽວຂ້ອງ ຕໍ່ເຈົ້າໜ້າທີ່ກວດກາອາຫານ ແລະ ຢາ ແລະ ເຈົ້າໜ້າທີ່ກ່ຽວຂ້ອງປະຈຳດ່ານ ເພື່ອດຳເນີນການກວດກາຕົວຈິງໃຫ້ຖືກຕ້ອງ ແລະ ສອດຄ່ອງຕາມບັນຊີຜະລິດຕະພັນເຄື່ອງສຳອາງ ທີ່ໄດ້ຮັບອະນຸຍາດ.
ການນຳເຂົ້າ-ສົ່ງອອກ, ນຳເຂົ້າຊົ່ວຄາວ ແລະ ສົ່ງຜ່ານຜະລິດຕະພັນເຄື່ອງສຳອາງ ຕ້ອງດຳເນີນຜ່ານດ່ານສາກົນເທົ່ານັ້ນ.
ການກວດກາຜະລິດຕະພັນເຄື່ອງສຳອາງຢູ່ດ່ານນຳເຂົ້າ ແມ່ນອີງໃສ່ຫຼັກການບໍລິຫານຄວາມສ່ຽງ.

## ໝວດທີ XII
## ອົງການຄຸ້ມຄອງ ແລະ ກວດກາຜະລິດຕະພັນເຄື່ອງສຳອາງ (ໃໝ່)

### ມາດຕາ 62 ອົງການຄຸ້ມຄອງ ແລະ ກວດກາຜະລິດຕະພັນເຄື່ອງສຳອາງ (ໃໝ່)

ອົງການຄຸ້ມຄອງ ແລະ ກວດກາຜະລິດຕະພັນເຄື່ອງສຳອາງ ປະກອບດ້ວຍ:

- ຄະນະກຳມະການແຫ່ງຊາດເພື່ອຄຸ້ມຄອງອາຫານ ແລະ ຢາ;
- ກະຊວງສາທາລະນະສຸກ ປະກອບດ້ວຍ: ກົມອາຫານ ແລະ ຢາ, ກອງກວດກາອາຫານ ແລະ ຢາ ແລະ ສູນວິໄຈອາຫານ ແລະ ຢາ;
- ພະແນກສາທາລະນະສຸກແຂວງ, ນະຄອນຫຼວງວຽງຈັນ;
- ຫ້ອງການສາທາລະນະສຸກເມືອງ, ນະຄອນ ແລະ ເທດສະບານ;
- ພາກສ່ວນທີ່ກ່ຽວຂ້ອງໃນແຕ່ລະຂັ້ນ ເຊັ່ນ: ການຄ້າ, ຕຳຫຼວດສິ່ງແວດລ້ອມ ແລະ ອື່ນໆ.

ນອກຈາກນັ້ນຍັງມີສະມາຄົມເຄື່ອງສຳອາງ ເພື່ອຊ່ວຍໃນການຄຸ້ມຄອງ ແລະ ສົ່ງເສີມໃນວຽກງານເຄື່ອງສຳອາງ.
ການຈັດຕັ້ງ ແລະ ການເຄື່ອນໄຫວຂອງຄະນະກຳມະການແຫ່ງຊາດ ເພື່ອຄຸ້ມຄອງອາຫານ ແລະ ຢາ ໄດ້ກຳນົດໄວ້ໃນລະບຽບການຕ່າງຫາກ.

### ມາດຕາ 63 ສິດ ແລະ ໜ້າທີ່ຂອງກະຊວງສາທາລະນະສຸກ (ໃໝ່)

ໃນການຄຸ້ມຄອງ ແລະ ກວດກາຄຸນນະພາບຜະລິດຕະພັນເຄື່ອງສຳອາງ ກະຊວງສາທາລະນະສຸກມີສິດ ແລະ ໜ້າທີ່ດັ່ງນີ້:

1. ຄົ້ນຄ້ວານະໂຍບາຍ, ແຜນຍຸດທະສາດ ແລະ ລະບຽບກົດໝາຍກ່ຽວກັບການຄຸ້ມຄອງກວດກາຜະລິດຕະພັນເຄື່ອງສຳອາງ ເພື່ອນຳສະເໜີລັດຖະບານພິຈາລະນາ;
2. ຫັນນະໂຍບາຍ ແລະ ແຜນການຍຸດທະສາດດັ່ງກ່າວເປັນແຜນການ, ແຜນງານ ແລະ ໂຄງການລະອຽດຂອງຕົນພ້ອມທັງຊີ້ນຳໃນການຈັດຕັ້ງປະຕິບັດ;
3. ໂຄສະນາ, ເຜີຍແຜ່, ສຶກສາອົບຮົມລະບຽບກົດໝາຍກ່ຽວກັບວຽກງານຄຸ້ມຄອງຜະລິດຕະພັນເຄື່ອງສຳອາງ;
4. ອະນຸຍາດໃຫ້ສ້າງຕັ້ງ, ໂຈະ ຫຼື ຍົກເລີກຫົວໜ່ວຍທຸລະກິດເຄື່ອງສຳອາງ;
5. ອອກອະນຸຍາດສົ່ງອອກ ແລະ ສົ່ງຜ່ານ ຜະລິດຕະພັນເຄື່ອງສຳອາງ;
6. ອອກຈົດແຈ້ງ, ກຳນົດບັນຊີ, ຢັ້ງຢືນມາດຕະຖານການຜະລິດທີ່ດີ, ການວິໄຈຄຸນນະພາບ, ການອະນຸຍາດໂຄສະນາຜະລິດຕະພັນເຄື່ອງສຳອາງ;
7. ໂຈະ ຫຼື ຍົກເລີກ ຂໍ້ຕົກລົງ, ຄຳສັ່ງ, ຄຳແນະນຳ ແລະ ແຈ້ງການ ຂອງອົງການຄຸ້ມຄອງກວດກາເຄື່ອງສຳອາງ ຂັ້ນລຸ່ມທີ່ຂຶ້ນກັບຕົນ ເຊິ່ງຂັດກັບລະບຽບກົດໝາຍ;
8. ພິຈາລະນາແກ້ໄຂຄຳສະເໜີຂອງບຸກຄົນ ແລະ ການຈັດຕັ້ງກ່ຽວກັບຄຸນນະພາບ, ມາດຕະຖານເຄື່ອງສຳອາງ;
9. ລົງກວດກາ ແລະ ຕິດຕາມຄຸນນະພາບ ແລະ ຄວາມປອດໄພຜະລິດຕະພັນເຄື່ອງສຳອາງ ແລະ ປະຕິບັດມາດຕະການໂດຍປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ໃນການຄຸ້ມຄອງກວດກາຫຼັງການຈຳໜ່າຍ ຜະລິດຕະພັນເຄື່ອງສຳອາງ ໃນທ້ອງຕະຫຼາດ;
10. ພົວພັນ ແລະ ຮ່ວມມືກັບຕ່າງປະເທດ ແລະ ອົງການຈັດຕັ້ງສາກົນ ເພື່ອສ້າງເງື່ອນໄຂສະດວກໃຫ້ແກ່ວຽກງານຄຸ້ມຄອງ ແລະ ກວດກາຜະລິດຕະພັນເຄື່ອງສຳອາງ;

11. ສະຫຼຸບ ແລະ ລາຍງານຜົນຂອງການຈັດຕັ້ງປະຕິບັດວຽກງານ ໃຫ້ລັດຖະບານຢ່າງເປັນປົກກະຕິ;
12. ວາງມາດຕະການຕໍ່ຜູ້ລະເມີດ;
13. ປະຕິບັດສິດ ແລະ ໜ້າທີ່ອື່ນຕາມທີ່ໄດ້ກຳນົດໄວ້ໃນລະບຽບກົດໝາຍ.

**ມາດຕາ 64 ສິດ ແລະ ໜ້າທີ່ຂອງພະແນກສາທາລະນະສຸກແຂວງ, ນະຄອນຫຼວງວຽງຈັນ (ໃໝ່)**

ໃນການຄຸ້ມຄອງ ແລະ ກວດກາຄຸນນະພາບຜະລິດຕະພັນເຄື່ອງສຳອາງ ພະແນກສາທາລະນະສຸກແຂວງ, ນະຄອນຫຼວງວຽງຈັນ ມີສິດ ແລະ ໜ້າທີ່ດັ່ງນີ້:

1. ອະນຸຍາດໃຫ້ສ້າງຕັ້ງ, ໂຈະ ຫຼື ຍົກເລີກຫົວໜ່ວຍທຸລະກິດເຄື່ອງສຳອາງຕາມການມອບໝາຍຂອງຂັ້ນເທິງ;
2. ຜັນຂະຫຍາຍນະໂຍບາຍ, ແຜນຍຸດທະສາດ ແລະ ລະບຽບກົດໝາຍ ກ່ຽວກັບວຽກງານຄຸ້ມຄອງກວດກາ ຜະລິດຕະພັນເຄື່ອງສຳອາງ ເພື່ອຈັດຕັ້ງປະຕິບັດ;
3. ອອກອະນຸຍາດການນຳເຂົ້າ ພາຍຫຼັງທີ່ໄດ້ຮັບການຈົດແຈ້ງ, ໂຄສະນາ, ເຜີຍແຜ່, ສຶກສາອົບຮົມລະບຽບກົດໝາຍກ່ຽວກັບວຽກງານຄຸ້ມຄອງຜະລິດຕະພັນເຄື່ອງສຳອາງ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ;
4. ສະເໜີຕໍ່ກົມອາຫານ ແລະ ຢາ, ກະຊວງສາທາລະນະສຸກ ເພື່ອຂໍສ້າງຕັ້ງ, ໂຈະ ຫຼື ຍົກເລີກຫົວໜ່ວຍທຸລະກິດຜະລິດຕະພັນເຄື່ອງສຳອາງ ຕາມພາລະບົດບາດຂອງຕົນ;
5. ສະເໜີຕໍ່ກົມອາຫານ ແລະ ຢາ, ກະຊວງສາທາລະນະສຸກ ໃນການຢັ້ງຢືນມາດຕະຖານການຜະລິດທີ່ດີ, ການວິໄຈຄຸນນະພາບ ແລະ ອະນຸຍາດການໂຄສະນາຜະລິດຕະພັນເຄື່ອງສຳອາງ;
6. ກວດຜ່ານການນຳເຂົ້າຜະລິດຕະພັນເຄື່ອງສຳອາງ ພາຍຫຼັງທີ່ໄດ້ຮັບການຈົດແຈ້ງຈາກກົມອາຫານ ແລະ ຢາ ແລ້ວ;
7. ໂຈະ ຫຼື ຍົກເລີກຂໍ້ຕົກລົງ, ຄຳສັ່ງ, ຄຳແນະນຳ ແລະ ແຈ້ງການຂອງຫ້ອງການສາທາລະນະສຸກເມືອງ,ນະຄອນ ແລະ ເທດສະບານ ທີ່ຂັດກັບລະບຽບກົດໝາຍ;
8. ພິຈາລະນາແກ້ໄຂຄຳສະເໜີຂອງບຸກຄົນ ແລະ ການຈັດຕັ້ງກ່ຽວກັບຄຸນນະພາບ, ມາດຕະຖານເຄື່ອງສຳອາງ, ວຽກງານຄຸ້ມຄອງ ແລະ ກວດກາເຄື່ອງສຳອາງ ຕາມພາລະບົດບາດຂອງຕົນ;
9. ປະສານສົມທົບກັບພາກສ່ວນກ່ຽວຂ້ອງຢູ່ຂັ້ນຂອງຕົນ ໃນການຄຸ້ມຄອງກວດກາຜະລິດຕະພັນເຄື່ອງສຳອາງຫຼັງການຈຳໜ່າຍໃນທ້ອງຕະຫຼາດ ໃນຂອບເຂດແຂວງ/ນະຄອນຫຼວງວຽງຈັນຂອງຕົນ ເພື່ອໃຫ້ໄດ້ຮັບການຈັດຕັ້ງປະຕິບັດຢ່າງມີປະສິດທິຜົນ;
10. ພົວພັນຮ່ວມມືກັບຕ່າງປະເທດ ແລະ ອົງການຈັດຕັ້ງສາກົນ ເພື່ອສ້າງເງື່ອນໄຂຄວາມສະດວກໃຫ້ແກ່ວຽກງານຄຸ້ມຄອງຜະລິດຕະພັນເຄື່ອງສຳອາງ;
11. ສະຫຼຸບ ແລະ ລາຍງານຜົນການຈັດຕັ້ງປະຕິບັດວຽກງານອະນຸຍາດໃຫ້ສ້າງຕັ້ງ, ໂຈະ ຫຼື ຍົກເລີກຫົວໜ່ວຍທຸລະກິດຜະລິດຕະພັນເຄື່ອງສຳອາງ ໃຫ້ກົມອາຫານ ແລະ ຢາ, ກະຊວງສາທາລະນະສຸກ ແລະ ອົງການປົກຄອງແຂວງ/ນະຄອນຫຼວງວຽງຈັນ ຢ່າງເປັນປົກກະຕິ;
12. ປະຕິບັດສິດ ແລະ ໜ້າທີ່ອື່ນຕາມທີ່ໄດ້ກຳນົດໄວ້ໃນລະບຽບກົດໝາຍ.

**ມາດຕາ 65 ສິດ ແລະ ໜ້າທີ່ຂອງຫ້ອງການສາທາລະນະສຸກເມືອງ, ນະຄອນ ແລະ ເທດສະບານ (ໃໝ່)**

ໃນການຄຸ້ມຄອງ ແລະ ກວດກາຄຸນນະພາບຜະລິດຕະພັນເຄື່ອງສຳອາງ ຫ້ອງການສາທາລະນະສຸກເມືອງ, ນະຄອນ ແລະ ເທດສະບານ, ມີສິດ ແລະ ໜ້າທີ່ດັ່ງນີ້:

1. ຈັດຕັ້ງປະຕິບັດນະໂຍບາຍ, ແຜນຍຸດທະສາດ ແລະ ລະບຽບກົດໝາຍກ່ຽວກັບວຽກງານຄຸ້ມຄອງກວດກາ ສະເໜີອອກອະນຸຍາດໃຫ້ສ້າງຕັ້ງຜະລິດຕະພັນເຄື່ອງສຳອາງ ຢ່າງມີປະສິດທິຜົນ;

2. ໂຄສະນາເຜີຍແຜ່, ສຶກສາອົບຮົມລະບຽບກົດໝາຍ ກ່ຽວກັບວຽກງານອະນຸຍາດໃຫ້ສ້າງຕັ້ງ, ໂຈະ ຫຼື ຍົກເລີກ ຫົວໜ່ວຍທຸລະກິດຜະລິດຕະພັນເຄື່ອງສໍາອາງ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ;
3. ສະເໜີຕໍ່ພະແນກສາທາລະນະສຸກແຂວງ, ນະຄອນຫຼວງວຽງຈັນ ພິຈາລະນາ/ນໍາສະເໜີຂໍສ້າງຕັ້ງ, ໂຈະ ຫຼື ຍົກເລີກ ຫົວໜ່ວຍທຸລະກິດຜະລິດຕະພັນເຄື່ອງສໍາອາງ ຕາມພາລະບົດບາດຂອງຕົນ;
4. ນໍາສະເໜີຕໍ່ພະແນກສາທາລະນະສຸກແຂວງ, ນະຄອນຫຼວງວຽງຈັນ ພິຈາລະນາແກ້ໄຂຄໍາສະເໜີຂອງບຸກຄົນ ແລະ ການຈັດຕັ້ງກ່ຽວກັບຄຸນນະພາບ, ມາດຕະຖານຜະລິດຕະພັນເຄື່ອງສໍາອາງ ຕາມພາລະບົດບາດຂອງຕົນ;
5. ປະສານສົມທົບກັບພາກສ່ວນກ່ຽວຂ້ອງ ໃນການຄຸ້ມຄອງກວດກາຜະລິດຕະພັນເຄື່ອງສໍາອາງ ທີ່ງການຈໍາໜ່າຍ ໃນທ້ອງຕະຫຼາດໃນຂອບເຂດເມືອງ, ນະຄອນ ແລະ ເທດສະບານຂອງຕົນ ໃຫ້ໄດ້ຮັບການຈັດຕັ້ງປະຕິບັດຢ່າງມີ ປະສິດທິຜົນ;
6. ສະຫຼຸບ ແລະ ລາຍງານຜົນຂອງການຈັດຕັ້ງປະຕິບັດວຽກງານຜະລິດຕະພັນເຄື່ອງສໍາອາງໃຫ້ພະແນກສາທາລະນະສຸກ ແຂວງ, ນະຄອນຫຼວງວຽງຈັນ ແລະ ອົງການປົກຄອງເມືອງ, ນະຄອນ ແລະ ເທດສະບານ ຢ່າງເປັນປົກກະຕິ;
7. ປະຕິບັດສິດ ແລະ ໜ້າທີ່ອື່ນ ຕາມທີ່ໄດ້ກໍານົດໄວ້ໃນລະບຽບກົດໝາຍ.

**ມາດຕາ 66 ສິດ ແລະ ໜ້າທີ່ຂອງສະມາຄົມເຄື່ອງສໍາອາງ (ໃໝ່)**

ໃນການຄຸ້ມຄອງ ແລະ ກວດກາຄຸນນະພາບ ສະມາຄົມເຄື່ອງສໍາອາງມີສິດ ແລະ ໜ້າທີ່ຊ່ວຍໃນການຄຸ້ມຄອງ ແລະ ສົ່ງເສີມ ໃນວຽກງານເຄື່ອງສໍາອາງດັ່ງນີ້:

1. ດໍາເນີນທຸລະກິດໃຫ້ຖືກຕ້ອງ ແລະ ສອດຄ່ອງກັບລະບຽບກົດໝາຍ;
2. ປຸກລະດົມ, ຂົນຂວາຍ, ຈັດຕັ້ງ, ເຕົ້າໂຮມ ບັນດາຜູ້ປະກອບການຜະລິດຕະພັນເຄື່ອງສໍາອາງ ເພື່ອຊ່ວຍເຫຼືອເຊິ່ງກັນ ແລະ ກັນ;
3. ຊຸກຍູ້, ສົ່ງເສີມ ບັນດາຫົວໜ່ວຍທຸລະກິດ ທີ່ເປັນສະມາຊິກຂອງຕົນ ໃຫ້ເຄື່ອນໄຫວຢ່າງມີປະສິດທິຜົນ, ຖືກຕ້ອງ ຕາມກົດໝາຍ ແລະ ລະບຽບການ;
4. ໃຫ້ຄໍາແນະນໍາ, ສະໜອງຂໍ້ມູນຂ່າວສານ ແລະ ປະສານງານກັບພາກລັດ ທີ່ກ່ຽວຂ້ອງເພື່ອໃຫ້ການຊ່ວຍເຫຼືອ ແລະ ອໍານວຍຄວາມສະດວກ ແກ່ການສ້າງຕັ້ງຫົວໜ່ວຍທຸລະກິດເຄື່ອງສໍາອາງໃໝ່;
5. ປະກອບສ່ວນໃນການຄົ້ນຄວ້າ ແລະ ປະກອບຄໍາຄິດຄໍາເຫັນໃຫ້ແກ່ອົງການຈັດຕັ້ງລັດ ຕໍ່ການປັບປຸງນະໂຍບາຍ, ການສ້າງກົດໝາຍ ແລະ ລະບຽບການຕ່າງໆ ທີ່ຕິດພັນກັບພາກທຸລະກິດ ເພື່ອສ້າງສະພາບແວດລ້ອມທີ່ດີໃຫ້ແກ່ ການດໍາເນີນທຸລະກິດ;
6. ຊຸກຍູ້, ສົ່ງເສີມ ສະມາຄົມເຄື່ອງສໍາອາງໃຫ້ໄດ້ຮັບການພັດທະນາທີ່ດີຂຶ້ນ;
7. ກໍ່ສ້າງ ແລະ ບໍາລຸງຍົກລະດັບຄວາມຮູ້, ປະສົບການກ່ຽວກັບການດໍາເນີນທຸລະກິດດ້ານເຄື່ອງສໍາອາງ ໃຫ້ແກ່ ສະມາຊິກດ້ວຍຫຼາຍຮູບການຕ່າງໆທີ່ເໝາະສົມ ຢູ່ພາຍໃນ ແລະ ຕ່າງປະເທດ;
8. ຊີ້ນໍາ, ນໍາພາ ການຈັດຕັ້ງ ແລະ ການເຄື່ອນໄຫວຂອງສະມາຄົມເຄື່ອງສໍາອາງ ໃນການປະຕິບັດກົດລະບຽບຂອງ ເຄື່ອງສໍາອາງ ໃຫ້ເປັນເອກະພາບ ແລະ ມີປະສິດທິຜົນ;
9. ເປັນເຈົ້າການປະສານງານກັບພາກທຸລະກິດ ແລະ ພາກລັດທີ່ກ່ຽວຂ້ອງ ເພື່ອສະໜອງຂໍ້ມູນຂ່າວສານກ່ຽວກັບ ຜະລິດຕະພັນເຄື່ອງສໍາອາງ;
10. ຊ່ວຍຕິດຕາມ, ສືບຄົ້ນຫາ ແລະ ຮຽກເກັບຄືນຜະລິດຕະພັນເຄື່ອງສໍາອາງໃນກໍລະນີທີ່ບໍ່ມີຄຸນນະພາບ, ບໍ່ໄດ້ ມາດຕະຖານ ແລະ ບໍ່ປອດໄພ ຂອງບັນດາຫົວໜ່ວຍທຸລະກິດທີ່ເປັນສະມາຊິກຂອງຕົນ ແລະ ລາຍງານມາຍັງ ກົມອາຫານ ແລະ ຢາໃຫ້ຮັບຊາບຢ່າງທັນການ;
11. ປະຕິບັດສິດ ແລະ ໜ້າທີ່ອື່ນ ຕາມທີ່ໄດ້ກໍານົດໄວ້ໃນລະບຽບກົດໝາຍ.

## ໝວດທີ XIII
## ສິດ ແລະ ພັນທະຂອງຜູ້ປະກອບການ ແລະ ຜູ້ຊົມໃຊ້ຜະລິດຕະພັນເຄື່ອງສຳອາງ

### ມາດຕາ 67 ສິດ ແລະ ພັນທະຂອງຜູ້ປະກອບການ (ໃໝ່)

ຜູ້ປະກອບການ ມີສິດຕົ້ນຕໍ ດັ່ງນີ້:

1. ດຳເນີນທຸລະກິດ ການຜະລິດ, ນຳເຂົ້າ-ສົ່ງອອກ, ນຳເຂົ້າຊົ່ວຄາວ, ສົ່ງຜ່ານ ແລະ ຈໍລະຈອນຈຳໜ່າຍ ຕາມລະບຽບກົດໝາຍ;
2. ຮ້ອງທຸກຕໍ່ຂະແໜງການກ່ຽວຂ້ອງ ຕາມລະບຽບກົດໝາຍ ທີ່ເນື່ອງມາຈາກການລະເມີດສິດ ໃນການດຳເນີນທຸລະກິດຂອງຕົນ ຫຼື ການປະຕິບັດງານຂອງເຈົ້າໜ້າທີ່ກວດກາອາຫານ ແລະ ຢາ;
3. ໄດ້ຮັບຂໍ້ມູນຂ່າວສານ ກ່ຽວກັບວຽກງານເຄື່ອງສຳອາງ;
4. ປະຕິບັດສິດອື່ນ ຕາມທີ່ໄດ້ກຳນົດໄວ້ໃນລະບຽບກົດໝາຍ.

ຜູ້ປະກອບການ ມີພັນທະຕົ້ນຕໍ ດັ່ງນີ້:

1. ຮັບປະກັນຄຸນນະພາບ, ມາດຕະຖານ ແລະ ຄວາມປອດໄພ ຕາມການກຳນົດຂອງກົດໝາຍທີ່ກ່ຽວຂ້ອງ;
2. ສະໜອງຂໍ້ມູນທີ່ຄົບຖ້ວນ ແລະ ຈະແຈ້ງກ່ຽວກັບສ່ວນປະກອບຂອງສູດຕຳລາ, ຂໍ້ແນະນຳ ສຳລັບການນຳໃຊ້, ຄຳເຕືອນ, ຂໍ້ຫ້າມໃຊ້, ວັນເດືອນປີຜະລິດ ແລະ ໝົດອາຍຸ;
3. ເກັບຮັກສາຂໍ້ມູນລາຍລະອຽດກ່ຽວກັບຄຸນນະພາບ ແລະ ຄວາມປອດໄພຂອງຜະລິດຕະພັນເຄື່ອງສຳອາງເພື່ອຢັ້ງຢືນຄວາມຖືກຕ້ອງ ແລະ ສອດຄ່ອງກັບຄຸນນະພາບຜະລິດຕະພັນເຄື່ອງສຳອາງ;
4. ໃຫ້ຄວາມຮ່ວມມື ແລະ ອຳນວຍຄວາມສະດວກ ໃຫ້ແກ່ເຈົ້າໜ້າທີ່ກວດກາອາຫານ ແລະ ຢາ ໃນເວລາປະຕິບັດໜ້າທີ່;
5. ຮັບຜິດຊອບຕໍ່ຄວາມເສຍຫາຍ ທີ່ເນື່ອງມາຈາກຜະລິດຕະພັນເຄື່ອງສຳອາງບໍ່ມີຄຸນນະພາບ, ບໍ່ໄດ້ມາດຕະຖານ ແລະ ບໍ່ມີຄວາມປອດໄພຕໍ່ຜູ້ຊົມໃຊ້ ຊຶ່ງຕົນໄດ້ສະໜອງ;
6. ຕື່ນຕົວສະໝັກໃຈ ເຂົ້າເປັນສະມາຊິກສະມາຄົມເຄື່ອງສຳອາງຂອງລາວ ແລະ ເຂົ້າຮ່ວມການເຄື່ອນໄຫວຂອງວຽກງານສະມາຄົມ ທີ່ວາງອອກຢ່າງເປັນປົກກະຕິ;
7. ປະຕິບັດພັນທະອື່ນ ຕາມທີ່ໄດ້ກຳນົດໄວ້ໃນລະບຽບກົດໝາຍ.

### ມາດຕາ 68 ສິດ ແລະ ພັນທະຂອງຜູ້ຊົມໃຊ້ (ໃໝ່)

ຜູ້ຊົມໃຊ້ມີສິດຕົ້ນຕໍ ດັ່ງນີ້:

1. ໄດ້ຮັບຜະລິດຕະພັນ ທີ່ມີຄຸນນະພາບ, ມາດຕະຖານ ແລະ ປອດໄພ;
2. ໄດ້ຮັບຂໍ້ມູນທີ່ຄົບຖ້ວນ ແລະ ຈະແຈ້ງກ່ຽວກັບສ່ວນປະກອບຂອງສູດຕຳລາ, ຂໍ້ແນະນຳສຳລັບການນຳໃຊ້, ຄຳເຕືອນ, ຂໍ້ຫ້າມໃຊ້, ວັນເດືອນປີຜະລິດ ແລະ ໝົດອາຍຸ;
3. ໄດ້ຮັບການປົກປ້ອງຈາກການຫຼອກລວງ ແລະ ການໃຫ້ຂໍ້ມູນຂ່າວສານທີ່ຜິດພາດ ຢູ່ໃນການຫຸ້ມຫໍ່, ການຕິດສະຫຼາກ, ການໂຄສະນາ ແລະ ການຈຳໜ່າຍຜະລິດຕະພັນເຄື່ອງສຳອາງ;
4. ຮ້ອງທຸກຕໍ່ຂະແໜງການກ່ຽວຂ້ອງ ຕາມລະບຽບກົດໝາຍ ທີ່ເນື່ອງມາຈາກການຊົມໃຊ້ຜະລິດຕະພັນເຄື່ອງສຳອາງທີ່ບໍ່ມີຄຸນນະພາບ, ບໍ່ໄດ້ມາດຕະຖານ ແລະ ບໍ່ມີຄວາມປອດໄພ ແລະ ມີຜົນກະທົບຕໍ່ສຸຂະພາບ, ຊີວິດ ແລະ ຊັບສິນຂອງຕົນ;
5. ປະຕິບັດສິດອື່ນ ຕາມທີ່ໄດ້ກຳນົດໄວ້ໃນລະບຽບກົດໝາຍ.

ຜູ້ຊົມໃຊ້ມີພັນທະດັ່ງນີ້ ດັ່ງນີ້:

1. ນຳໃຊ້ຜະລິດຕະພັນເຄື່ອງສຳອາງ ຕາມຂໍ້ແນະນຳ ແລະ ຄຳເຕືອນ ໃນການນຳໃຊ້;
2. ແຈ້ງ ຫຼື ລາຍງານຂໍ້ມູນຂ່າວສານ ກ່ຽວກັບຜະລິດຕະພັນເຄື່ອງສຳອາງ ທີ່ບໍ່ມີຄຸນນະພາບ, ບໍ່ໄດ້ມາດຕະຖານ ແລະ ບໍ່ມີຄວາມປອດໄພ;
3. ເປັນເຈົ້າການໃນການເຂົ້າຮ່ວມຮັບຟັງ ການເຜີຍແຜ່ຂໍ້ມູນທາງດ້ານວິຊາການ ກ່ຽວກັບຜະລິດຕະພັນເຄື່ອງສຳອາງ;
4. ປະຕິບັດພັນທະອື່ນ ຕາມທີ່ໄດ້ກຳນົດໄວ້ໃນລະບຽບກົດໝາຍ.

## ໝວດທີ XIV
## ຂໍ້ຫ້າມ

### ມາດຕາ 69 ຂໍ້ຫ້າມສຳລັບເຈົ້າໜ້າທີ່ອົງການຄຸ້ມຄອງທີ່ກ່ຽວຂ້ອງຂອງລັດ (ໃໝ່)

ຫ້າມເຈົ້າໜ້າທີ່ ອົງການຄຸ້ມຄອງທີ່ກ່ຽວຂ້ອງຂອງລັດ ປະພຶດດັ່ງນີ້:

1. ກົດໜ່ວງຖ່ວງດຶງ ຂັ້ນຕອນການຈົດແຈ້ງ, ຜະລິດ, ນຳເຂົ້າ-ສົ່ງອອກ, ນຳເຂົ້າຊົ່ວຄາວ ແລະ ສົ່ງຜ່ານເພື່ອທວງເອົາ, ຂໍເອົາ, ຮັບສິນບົນ, ຮຽກຮ້ອງຄ່າຕອບແທນ, ສວຍໃຊ້ຖານະຕຳແໜ່ງ, ສິດ ແລະ ໜ້າທີ່ທາງລັດຖະການເພື່ອຜົນປະໂຫຍດສ່ວນຕົວ;
2. ປອມແປງເອກະສານ ຫຼື ນຳໃຊ້ເອກະສານ ຫຼື ສະໜອງຂໍ້ມູນ ທີ່ເປັນຄວາມລັບຂອງບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງໂດຍບໍ່ໄດ້ຮັບອະນຸຍາດ;
3. ກວດຜ່ານຜະລິດຕະພັນເຄື່ອງສຳອາງທີ່ຜະລິດ, ນຳເຂົ້າ-ສົ່ງອອກ, ນຳເຂົ້າຊົ່ວຄາວ ແລະ ສົ່ງຜ່ານໂດຍບໍ່ໄດ້ຢັ້ງຢືນການຈົດແຈ້ງ ແລະ ໄດ້ຮັບອະນຸມັດຈາກຂະແໜງສາທາລະນະສຸກ;
4. ປົກປິດ, ສະໜັບສະໜູນ, ຊ່ວຍເຫຼືອ ແລະ ສົມຮູ້ຮ່ວມຄິດກັບຜູ້ທີ່ຜະລິດ, ນຳເຂົ້າ-ສົ່ງອອກ, ນຳເຂົ້າຊົ່ວຄາວ, ສົ່ງຜ່ານ ແລະ ຈຳໜ່າຍຜະລິດຕະພັນເຄື່ອງສຳອາງ ທີ່ບໍ່ໄດ້ຄຸນນະພາບ ແລະ ມາດຕະຖານຕາມລະບຽບການກຳນົດ;
5. ເປີດເຜີຍຄວາມລັບທາງດ້ານສູດຕຳລາ ແລະ ຂໍ້ມູນທີ່ກ່ຽວຂ້ອງ ໂດຍບໍ່ໄດ້ຮັບອະນຸຍາດ;
6. ປະຕິບັດໜ້າທີ່ ທີ່ຂາດຄວາມຍຸຕິທຳ, ລຳອຽງ ແລະ ບໍ່ຖືກຕ້ອງຕາມລະບຽບກົດໝາຍ;
7. ເປີດເຜີຍຄວາມລັບຂອງບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງໃນເວລາປະຕິບັດໜ້າທີ່ວຽກງານ;
8. ມີພຶດຕິກຳອື່ນ ທີ່ເປັນການລະເມີດລະບຽບກົດໝາຍອື່ນທີ່ກ່ຽວຂ້ອງ.

### ມາດຕາ 70 ຂໍ້ຫ້າມສຳລັບຜູ້ຜະລິດ (ໃໝ່)

ຫ້າມຜູ້ຜະລິດ ມີພຶດຕິກຳ ດັ່ງນີ້:

1. ດຳເນີນການຜະລິດໂດຍບໍ່ໄດ້ຮັບອະນຸຍາດ ຈາກກົມອາຫານ ແລະ ຢາ, ກະຊວງສາທາລະນະສຸກ;
2. ດຳເນີນການຜະລິດ ໂດຍບໍ່ມີວິຊາການທີ່ໄດ້ຮັບອະນຸຍາດ;
3. ຜະລິດຕະພັນເຄື່ອງສຳອາງ ບໍ່ໄດ້ມາດຕະຖານ ແລະ ຄຸນນະພາບຕໍ່ຜູ້ຊົມໃຊ້; ບໍ່ໄດ້ຮັບການຢັ້ງຢືນຈາກກະຊວງສາທາລະນະສຸກ;
4. ຜະລິດຕະພັນເຄື່ອງສຳອາງທີ່ເກືອດຫ້າມ, ມີສ່ວນປະສົມສານເຄມີເກືອດຫ້າມ ຕາມບັນຊີຂອງກະຊວງສາທາລະນະສຸກ ກຳນົດອອກ;

5. ຜະລິດຕະພັນເຄື່ອງສຳອາງທີ່ບໍ່ມີສະຫຼາກ ຫຼື ມີສະຫຼາກທີ່ລະບຸລາຍລະອຽດເນື້ອໃນ ບໍ່ຄົບຖ້ວນຕາມທີ່ໄດ້ກຳນົດໃນມາດຕາ 53;
6. ຈຳໜ່າຍຜະລິດຕະພັນເຄື່ອງສຳອາງທີ່ໝົດອາຍຸ, ບໍ່ມີວັນເດືອນປີຜະລິດ ແລະ ໝົດອາຍຸ, ບໍ່ໄດ້ຮັບການຈົດແຈ້ງ ແລະ ບໍ່ກົງກັບການຈົດແຈ້ງໄວ້;
7. ປອມແປງຜະລິດຕະພັນເຄື່ອງສຳອາງ ເພື່ອຜົນປະໂຫຍດທາງດ້ານເສດຖະກິດ ທີ່ສ້າງຄວາມເສຍຫາຍໃຫ້ແກ່ຜູ້ອື່ນ;
8. ປອມແປງເອກະສານ ແລະ ສະໜອງເອກະສານປອມໃຫ້ແກ່ເຈົ້າໜ້າທີ່;
9. ບັນຈຸ ແລະ ຫຸ້ມຫໍ່ຜະລິດຕະພັນເຄື່ອງສຳອາງ ໃນພາຊະນະທີ່ບໍ່ປອດໄພ, ສິ່ງຜົນໃຫ້ເຄື່ອງສຳອາງເສື່ອມຄຸນນະພາບ ແລະ ເປັນອັນຕະລາຍຕໍ່ຜູ້ຊົມໃຊ້;
10. ເກັບຮັກສາເຄື່ອງສຳອາງໄວ້ໃນສາງ ຫຼື ສະຖານທີ່ ທີ່ບໍ່ໄດ້ມາດຕະຖານ ແລະ ບໍ່ເໝາະສົມ ເຊິ່ງເຮັດໃຫ້ເຄື່ອງສຳອາງເສື່ອມຄຸນນະພາບ;
11. ຍົກຍ້າຍສະຖານທີ່ຕັ້ງໂຮງງານ ໂດຍທີ່ບໍ່ໄດ້ຮັບອະນຸຍາດຈາກກະຊວງສາທາລະນະສຸກ;
12. ໂຄສະນາໂອ້ອວດເຖິງສັບພະຄຸນໃນການປິ່ນປົວພະຍາດ, ມີລັກສະນະຈູງໃຈ, ຊວນເຊື່ອເກີນຄວາມເປັນຈິງເຮັດໃຫ້ຜູ້ຊົມໃຊ້ເຂົ້າໃຈຜິດ; ມີລັກສະນະຂັດກັບວັດທະນະທຳ ແລະ ຮີດຄອງປະເພນີຂອງ ສປປ ລາວ;
13. ຜະລິດຕະພັນເຄື່ອງສຳອາງ ທີ່ສ້າງຄວາມເສຍຫາຍຕໍ່ສະພາບແວດລ້ອມ ກໍ່ໃຫ້ເກີດອັນຕະລາຍແກ່ຊີວິດ, ສຸຂະພາບ ແລະ ຊັບສິນຂອງບຸກຄົນອື່ນ ແລະ ສັງຄົມ;
14. ມີພຶດຕິກຳອື່ນ ທີ່ເປັນການລະເມີດລະບຽບກົດໝາຍອື່ນທີ່ກ່ຽວຂ້ອງ.

**ມາດຕາ 71 ຂໍ້ຫ້າມສຳລັບຜູ້ນຳເຂົ້າ-ສົ່ງອອກ ແລະ ນຳເຂົ້າຊົ່ວຄາວ (ໃໝ່)**

ຫ້າມຜູ້ນຳເຂົ້າ-ສົ່ງອອກ ແລະ ນຳເຂົ້າຊົ່ວຄາວ ມີພຶດຕິກຳ ດັ່ງນີ້:

1. ຜະລິດຕະພັນເຄື່ອງສຳອາງທີ່ມີອາຍຸຕໍ່າກວ່າ 70% ຂອງອາຍຸການນຳໃຊ້ຜະລິດຕະພັນ ແລະ ຈຳໜ່າຍຜະລິດຕະພັນເຄື່ອງສຳອາງທີ່ໝົດອາຍຸ, ບໍ່ມີວັນເດືອນປີຜະລິດ ແລະ ໝົດອາຍຸຕາມທີ່ທາງການກຳນົດ;
2. ຜະລິດຕະພັນເຄື່ອງສຳອາງ ບໍ່ໄດ້ມາດຕະຖານ ແລະ ຄຸນນະພາບຕໍ່ຜູ້ຊົມໃຊ້; ບໍ່ໄດ້ຮັບການຢັ້ງຢືນຈາກກະຊວງສາທາລະນະສຸກ; ບໍ່ໄດ້ຮັບການກວດກາຈາກເຈົ້າໜ້າທີ່ກວດກາອາຫານ ແລະ ຢາ ປະຈຳດ່ານ;
3. ຜະລິດຕະພັນເຄື່ອງສຳອາງທີ່ເກືອດຫ້າມ, ມີສ່ວນປະສົມສານເຄມີເກືອດຫ້າມ ຕາມບັນຊີຂອງກະຊວງສາທາລະນະສຸກ ກຳນົດອອກ;
4. ຜະລິດຕະພັນເຄື່ອງສຳອາງທີ່ບໍ່ມີສະຫຼາກ ຫຼື ມີສະຫຼາກທີ່ລະບຸລາຍລະອຽດເນື້ອໃນ ບໍ່ຄົບຖ້ວນຕາມທີ່ໄດ້ກຳນົດໃນມາດຕາ 53;
5. ນຳເຂົ້າຜະລິດຕະພັນເຄື່ອງສຳອາງ ທີ່ບໍ່ໄດ້ຮັບການຈົດແຈ້ງ, ບໍ່ກົງກັບການຈົດແຈ້ງໄວ້ ແລະ ບໍ່ກົງກັບເອກະສານທີ່ແຈ້ງນຳເຂົ້າຕົວຈິງ ຈາກກະຊວງສາທາລະນະສຸກ;
6. ນຳເຂົ້າຜະລິດຕະພັນເຄື່ອງສຳອາງ ເພື່ອຈຸດປະສົງການທຳລາຍ;
7. ປອມແປງຜະລິດຕະພັນຜະລິດຕະພັນເຄື່ອງສຳອາງ ເພື່ອຜົນປະໂຫຍດທາງດ້ານເສດຖະກິດ ທີ່ສ້າງຄວາມເສຍຫາຍໃຫ້ແກ່ຜູ້ອື່ນ;
8. ປອມແປງເອກະສານ ແລະ ສະໜອງເອກະສານປອມໃຫ້ແກ່ເຈົ້າໜ້າທີ່;
9. ບັນຈຸ ແລະ ຫຸ້ມຫໍ່ຜະລິດຕະພັນເຄື່ອງສຳອາງ ໃນພາຊະນະທີ່ບໍ່ປອດໄພ, ສົ່ງຜົນສະທ້ອນໃຫ້ຜະລິດຕະພັນເຄື່ອງສຳອາງ ເສື່ອມຄຸນນະພາບ ແລະ ເປັນອັນຕະລາຍຕໍ່ຜູ້ຊົມໃຊ້;

10. ເກັບຮັກສາຜະລິດຕະພັນເຄື່ອງສຳອາງໄວ້ໃນສາງ ຫຼື ສະຖານທີ່ ທີ່ບໍ່ໄດ້ມາດຕະຖານ ແລະ ບໍ່ເໝາະສົມ ເຊິ່ງເຮັດໃຫ້ຜະລິດຕະພັນເຄື່ອງສຳອາງເສື່ອມຄຸນນະພາບ;
11. ຍົກຍ້າຍສະຖານທີ່ຕັ້ງບໍລິສັດ ກ່ອນໄດ້ຮັບອະນຸຍາດຈາກກົມອາຫານ ແລະ ຢາ, ກະຊວງສາທາລະນະສຸກ ແລະ ຂະແໜງການອື່ນທີ່ກ່ຽວຂ້ອງ;
12. ໂຄສະນາໂອ້ອວດ, ກ່າວອ້າງສັບພະຄຸນໃນການປິ່ນປົວພະຍາດ, ມີລັກສະນະຈູງໃຈ, ຊວນເຊື່ອ ເກີນຄວາມເປັນຈິງຕາມທີ່ໄດ້ຈົດແຈ້ງໄວ້ແລ້ວ ເຊິ່ງເຮັດໃຫ້ຜູ້ຊົມໃຊ້ເຂົ້າໃຈຜິດ;
13. ສະຫຼາກ, ພາຊະນະຫຸ້ມຫໍ່ ແລະ ຮູບແບບຜະລິດຕະພັນເຄື່ອງສຳອາງ ທີ່ມີລັກສະນະຂັດກັບວັດທະນາທຳ ແລະ ຮີດຄອງປະເພນີຂອງ ສປປ ລາວ;
14. ນຳເຂົ້າ ແລະ ຜະລິດ ຜະລິດຕະພັນເຄື່ອງສຳອາງ ທີ່ສ້າງຄວາມເສຍຫາຍຕໍ່ສະພາບແວດລ້ອມທີ່ກໍ່ໃຫ້ເກີດອັນຕະລາຍແກ່ຊີວິດ, ສຸຂະພາບ, ຊັບສິນຂອງບຸກຄົນອື່ນ ແລະ ສັງຄົມ;
15. ມີພຶດຕິກຳອື່ນ ທີ່ເປັນການລະເມີດລະບຽບກົດໝາຍອື່ນທີ່ກ່ຽວຂ້ອງ.

**ມາດຕາ 72 ຂໍ້ຫ້າມສຳລັບຜູ້ສົ່ງຜ່ານ (ໃໝ່)**

ຫ້າມຜູ້ສົ່ງຜ່ານ ມີພຶດຕິກຳ ດັ່ງນີ້:

1. ຈໍລະຈອນຈຳໜ່າຍຜະລິດຕະພັນເຄື່ອງສຳອາງທີ່ສົ່ງຜ່ານ ໃນ ສປປ ລາວ;
2. ແຈ້ງເອກະສານທີ່ບໍ່ກົງກັບການແຈ້ງຜ່ານຕົວຈິງ;
3. ຜະລິດຕະພັນເຄື່ອງສຳອາງ ບໍ່ໄດ້ແຈ້ງເອກະສານທີ່ກ່ຽວຂ້ອງຕໍ່ເຈົ້າໜ້າທີ່ກວດກາອາຫານ ແລະ ຢາປະຈຳດ່ານ;
4. ຜະລິດຕະພັນເຄື່ອງສຳອາງສົ່ງຜ່ານຕາມດ່ານສາກົນ ທີ່ບໍ່ກົງກັບບັນຊີທີ່ກະຊວງສາທາລະນະສຸກກຳນົດ;
5. ຜະລິດຕະພັນເຄື່ອງສຳອາງ ສ້າງຄວາມເສຍຫາຍຕໍ່ສະພາບແວດລ້ອມ ທີ່ກໍ່ໃຫ້ເກີດອັນຕະລາຍແກ່ຊີວິດ, ສຸຂະພາບ, ຊັບສິນຂອງບຸກຄົນອື່ນ ແລະ ສັງຄົມ;
6. ມີພຶດຕິກຳອື່ນ ທີ່ເປັນການລະເມີດລະບຽບກົດໝາຍອື່ນທີ່ກ່ຽວຂ້ອງ.

**ມາດຕາ 73 ຂໍ້ຫ້າມສຳລັບຜູ້ຈຳໜ່າຍ ແລະ ໃຫ້ບໍລິການເສີມຄວາມງາມ (ໃໝ່)**

ຫ້າມຜູ້ຈຳໜ່າຍ ແລະ ໃຫ້ບໍລິການເສີມຄວາມງາມ ມີການປະພຶດ ດັ່ງນີ້:

1. ຈຳໜ່າຍ, ນຳໃຊ້ ຜະລິດຕະພັນເຄື່ອງສຳອາງ ຈາກແຫຼ່ງທີ່ມາບໍ່ຖືກຕ້ອງ, ບໍ່ໄດ້ມາດຕະຖານ ແລະ ຄຸນນະພາບຕໍ່ຜູ້ຊົມໃຊ້, ບໍ່ໄດ້ຮັບການຢັ້ງຢືນຈາກກະຊວງສາທາລະນະສຸກ;
2. ຈຳໜ່າຍ, ນຳໃຊ້ ຜະລິດຕະພັນເຄື່ອງສຳອາງທີ່ເກືອດຫ້າມ, ມີສ່ວນປະສົມສານເຄມີເກືອດຫ້າມ ຕາມບັນຊີຂອງກະຊວງສາທາລະນະສຸກກຳນົດອອກ;
3. ຈຳໜ່າຍ, ນຳໃຊ້ ຜະລິດຕະພັນເຄື່ອງສຳອາງທີ່ໝົດອາຍຸ, ບໍ່ມີວັນເດືອນປີຜະລິດ ແລະ ໝົດອາຍຸ;
4. ຈຳໜ່າຍ, ນຳໃຊ້ ຜະລິດຕະພັນເຄື່ອງສຳອາງທີ່ບໍ່ມີສະຫຼາກ ຫຼື ມີສະຫຼາກ ທີ່ລະບຸລາຍລະອຽດເນື້ອໃນບໍ່ຄົບຖ້ວນຕາມທີ່ໄດ້ກຳນົດໃນມາດຕາ 53;
5. ຊື້-ຈຳໜ່າຍຜະລິດຕະພັນເຄື່ອງສຳອາງ ທີ່ບໍ່ໄດ້ຮັບການຈົດແຈ້ງຈາກກະຊວງສາທາລະນະສຸກ;
6. ປະສົມ, ປຸງແຕ່ງ, ບັນຈຸ, ແບ່ງບັນຈຸ, ຫຸ້ມຫໍ່ ຫຼື ປ່ຽນແປງສະພາບຂອງຜະລິດຕະພັນເຄື່ອງສຳອາງ ໂດຍບໍ່ໄດ້ຮັບອະນຸຍາດຈາກກະຊວງສາທາລະນະສຸກ;
7. ຈຳໜ່າຍ, ນຳໃຊ້ ຜະລິດຕະພັນເຄື່ອງສຳອາງບັນຈຸ ແລະ ຫຸ້ມຫໍ່ຜະລິດຕະພັນເຄື່ອງສຳອາງໃນພາຊະນະທີ່ບໍ່ປອດໄພ ລວມທັງຜະລິດຕະພັນເຄື່ອງສຳອາງຫຸ້ມຫໍ່ບໍ່ຖືກຕ້ອງ (ບໍ່ຖືກຕາມຫົວໜ່ວຍມັດຫໍ່ເດີມ) ທີ່ສົ່ງຜົນໃຫ້ຜະລິດຕະພັນເຄື່ອງສຳອາງເສື່ອມຄຸນນະພາບ ແລະ ເປັນອັນຕະລາຍຕໍ່ຜູ້ຊົມໃຊ້;

8. ຈຳໜ່າຍສິນຄ້າຕົວຢ່າງເຄື່ອງສຳອາງ, ປອມແປງຜະລິດຕະພັນເຄື່ອງສຳອາງ ເພື່ອຜົນປະໂຫຍດທາງດ້ານເສດຖະກິດທີ່ສ້າງຄວາມເສຍຫາຍໃຫ້ແກ່ຜູ້ອື່ນ;
9. ປອມແປງເອກະສານ ແລະ ສະໜອງເອກະສານປອມ ໃຫ້ແກ່ເຈົ້າໜ້າທີ່ໃນເວລາປະຕິບັດໜ້າທີ່;
10. ເກັບຮັກສາຜະລິດຕະພັນເຄື່ອງສຳອາງໄວ້ໃນສາງ ຫຼື ສະຖານທີ່ ທີ່ບໍ່ໄດ້ມາດຕະຖານ ແລະ ບໍ່ເໝາະສົມ ເຊິ່ງເຮັດໃຫ້ຜະລິດຕະພັນເຄື່ອງສຳອາງເສື່ອມຄຸນນະພາບ;
11. ໂຄສະນາຜະລິດຕະພັນເຄື່ອງສຳອາງ ທີ່ບໍ່ໄດ້ຮັບອະນຸຍາດຈາກກະຊວງສາທາລະນະສຸກ (ບໍ່ອະນຸຍາດໃຫ້ຮ້ານຂາຍຍ່ອຍ ຜະລິດຕະພັນເຄື່ອງສຳອາງໂຄສະນາ);
12. ນຳໃບຢັ້ງຢືນການຈົດແຈ້ງ ຜະລິດຕະພັນເຄື່ອງສຳອາງ ເພື່ອໄປໂຄສະນາ ໂດຍບໍ່ໄດ້ຮັບອະນຸຍາດໃນທຸກຮູບແບບ;
13. ຈຳໜ່າຍ, ນຳໃຊ້ ຜະລິດຕະພັນເຄື່ອງສຳອາງມີສະຫຼາກ, ພາຊະນະຫຸ້ມຫໍ່ ແລະ ຮູບແບບ ທີ່ມີລັກສະນະຂັດກັບວັດທະນາທຳ ແລະ ຮີດຄອງປະເພນີຂອງ ສປປ ລາວ;
14. ຈຳໜ່າຍ, ນຳໃຊ້ ຜະລິດຕະພັນເຄື່ອງສຳອາງ ທີ່ສ້າງຄວາມເສຍຫາຍຕໍ່ສະພາບແວດລ້ອມ ທີ່ກໍ່ໃຫ້ເກີດອັນຕະລາຍແກ່ຊີວິດ, ສຸຂະພາບ ແລະ ຊັບສິນຂອງບຸກຄົນອື່ນ ແລະ ສັງຄົມ;
15. ມີພຶດຕິກຳອື່ນ ທີ່ເປັນການລະເມີດລະບຽບກົດໝາຍອື່ນທີ່ກ່ຽວຂ້ອງ.

### ມາດຕາ 74 ຂໍ້ຫ້າມຜູ້ຊົມໃຊ້ (ໃໝ່)

ຫ້າມຜູ້ຊົມໃຊ້ ມີການປະພຶດ ດັ່ງນີ້:

1. ໂຄສະນາ ແລະ ໃສ່ຮ້າຍປ້າຍສີຜະລິດຕະພັນເຄື່ອງສຳອາງ ແລະ ການບໍລິການ ຫຼື ມີການກະທຳທີ່ກໍ່ໃຫ້ ເກີດຄວາມເສຍຫາຍຕໍ່ຜູ້ດຳເນີນທຸລະກິດເຄື່ອງສຳອາງ;
2. ນຳໃຊ້ຜະລິດຕະພັນເຄື່ອງສຳອາງ ມີສ່ວນປະສົມສານເຄມີ ແລະ ການບໍລິການທີ່ເກືອດຫ້າມ, ຂັດກັບລະບຽບກົດໝາຍ ແລະ ຮີດຄອງປະເພນີ ທີ່ດີງາມຂອງຊາດ;
3. ນຳໃຊ້ຜະລິດຕະພັນເຄື່ອງສຳອາງທີ່ເກືອດຫ້າມ, ມີສ່ວນປະສົມສານເຄມີເກືອດຫ້າມ ຕາມບັນຊີຂອງກະຊວງສາທາລະນະສຸກ ກຳນົດອອກ;
4. ມີພຶດຕິກຳອື່ນ ທີ່ເປັນການລະເມີດລະບຽບກົດໝາຍອື່ນທີ່ກ່ຽວຂ້ອງ.

## ໝວດທີ XV
## ນະໂຍບາຍຕໍ່ຜູ້ທີ່ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ (ປັບປຸງ)

### ມາດຕາ 75 ນະໂຍບາຍຕໍ່ຜູ້ທີ່ມີຜົນງານ (ໃໝ່)

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ມີຜົນງານດີເດັ່ນ ໃນການຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ ຈະໄດ້ຮັບການຍ້ອງຍໍດ້ວຍຮູບການທີ່ເໝາະສົມ ຈາກກະຊວງສາທາລະນະສຸກ.

### ມາດຕາ 76 ມາດຕະການຕໍ່ຜູ້ລະເມີດ (ປັບປຸງ)

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງທີ່ລະເມີດຂໍ້ຕົກລົງສະບັບນີ້ ຈະຖືກສຶກສາອົບຮົມ, ກ່າວເຕືອນ, ເຮັດບົດບັນທຶກ, ຂຽນຄຳປະຕິຍານ, ລົງວິໄນ, ຍຶດ, ອາຍັດສິນຄ້າ, ປັບໃໝ, ໃຊ້ແທນຄ່າເສຍຫາຍ ແລະ ຮ້ອງຟ້ອງຕາມລະບຽບກົດໝາຍທາງແພ່ງ ຫຼື ອາຍາ ແລ້ວແຕ່ກໍລະນີເບົາ ຫຼື ໜັກ, ໂດຍສະເພາະບັນດາມາດຕະການ ດັ່ງລຸ່ມນີ້:

1. **ມາດຕະການຕໍ່ເຈົ້າໜ້າທີ່ອົງການຄຸ້ມຄອງທີ່ກ່ຽວຂ້ອງຂອງລັດ**
   ເຈົ້າໜ້າທີ່ອົງການຄຸ້ມຄອງທີ່ກ່ຽວຂ້ອງຂອງລັດ ທີ່ລະເມີດຂໍ້ຫ້າມ ມາດຕາ 69 ຈະຖືກສຶກສາອົບຮົມ, ກ່າວເຕືອນ ແລະ ລົງວິໃນ ຕາມລະບຽບກົດໝາຍ.
2. **ມາດຕະການຕໍ່ຜູ້ປະກອບການ ແລະ ຊົມໃຊ້**
   ຜູ້ປະກອບການ ແລະ ຜູ້ຊົມໃຊ້ຜະລິດຕະພັນເຄື່ອງສຳອາງ ຫາກລະເມີດຂໍ້ຫ້າມ ຕາມມາດຕາ 70; 71; 72; 73 ແລະ 74 ຈະຖືກສຶກສາອົບຮົມ, ກ່າວເຕືອນ, ເຮັດບົດບັນທຶກ, ຂຽນຄຳປະຕິຍານ, ຍຶດ, ອາຍັດສິນຄ້າ ແລະ ປັບໄໝຕາມລະບຽບກົດໝາຍ ໂດຍສະເພາະຕາມແຕ່ກໍລະນີດັ່ງລຸ່ມນີ້:

**ລະເມີດຂໍ້ຫ້າມມາດຕາ 70 ຂໍ້ຫ້າມສຳລັບຜູ້ຜະລິດ (ໃໝ່)**

ຄັ້ງທີ 1 ກໍລະນີຜູ້ຜະລິດບໍ່ມີໃບອະນຸຍາດທາງວິຊາການໃຫ້ຢຸດກິດຈະການ ຈົນກວ່າຈະໄດ້ຮັບອະນຸຍາດ ໃນໄລຍະເວລາ 06 ເດືອນ ແລະ ສຶກສາອົບຮົມ, ກ່າວເຕືອນ, ເຮັດບົດບັນທຶກ, ຂຽນຄຳປະຕິຍານ ພ້ອມທັງຍຶດສິນຄ້າ ແລະ ຮັບຜິດຊອບຄ່າທຳລາຍຜະລິດຕະພັນເຄື່ອງສຳອາງ;

ຄັ້ງທີ 2 ກໍລະນີຜູ້ຜະລິດບໍ່ມີໃບອະນຸຍາດທາງວິຊາການໃຫ້ຢຸດກິດຈະການ ຈົນກວ່າຈະໄດ້ຮັບອະນຸຍາດ ໃນໄລຍະເວລາ 03 ເດືອນ ແລະ ເຮັດບົດບັນທຶກ ແລະ ຍຶດສິນຄ້າ ພ້ອມທັງປັບໄໝ 02 ເທົ່າຕົວ ຂອງມູນຄ່າສິນຄ້າທີ່ກວດພົບ ຕາມລາຄາຂາຍທ້ອງຕະຫຼາດ ແລະ ຮັບຜິດຊອບຄ່າທຳລາຍຜະລິດຕະພັນເຄື່ອງສຳອາງ;

ຄັ້ງທີ 3 ກໍລະນີຜູ້ຜະລິດບໍ່ມີໃບອະນຸຍາດທາງວິຊາການ ໃຫ້ປະສານງານກັບພາກສ່ວນກ່ຽວຂ້ອງ ປິດກິດຈະການຖາວອນ, ເຮັດບົດບັນທຶກ ແລະ ຍຶດສິນຄ້າ ພ້ອມທັງປັບໄໝ 04 ເທົ່າຕົວ ຂອງມູນຄ່າສິນຄ້າທີ່ກວດພົບຕາມລາຄາຂາຍທ້ອງຕະຫຼາດ ແລະ ຮັບຜິດຊອບຄ່າທຳລາຍຜະລິດຕະພັນເຄື່ອງສຳອາງ.

**ລະເມີດຂໍ້ຫ້າມ ມາດຕາ 71 ຂໍ້ຫ້າມສຳລັບຜູ້ນຳເຂົ້າ-ສົ່ງອອກ ແລະ ນຳເຂົ້າຊົ່ວຄາວ (ໃໝ່)**

ຄັ້ງທີ 1 ສຶກສາອົບຮົມ, ກ່າວເຕືອນ, ເຮັດບົດບັນທຶກ ແລະ ຂຽນຄຳປະຕິຍານ ພ້ອມທັງຍຶດສິນຄ້າ ແລະ ຮັບຜິດຊອບຄ່າທຳລາຍຜະລິດຕະພັນເຄື່ອງສຳອາງ;

ຄັ້ງທີ 2 ເຮັດບົດບັນທຶກ ພ້ອມທັງຍຶດສິນຄ້າ ແລະ ປັບໄໝ 01 ເທົ່າຕົວ ຂອງມູນຄ່າສິນຄ້າທີ່ກວດພົບ ຕາມລາຄາຂາຍທ້ອງຕະຫຼາດ ແລະ ຮັບຜິດຊອບຄ່າທຳລາຍຜະລິດຕະພັນເຄື່ອງສຳອາງ;

ຄັ້ງທີ 3 ເຮັດບົດບັນທຶກ ພ້ອມທັງຍຶດສິນຄ້າ ແລະ ປັບໄໝ 02 ເທົ່າຕົວ ຂອງມູນຄ່າສິນຄ້າທີ່ກວດພົບ ຕາມລາຄາຂາຍທ້ອງຕະຫຼາດ ແລະ ຮັບຜິດຊອບຄ່າທຳລາຍຜະລິດຕະພັນເຄື່ອງສຳອາງ.

**ລະເມີດຂໍ້ຫ້າມ ມາດຕາ 72 ຂໍ້ຫ້າມສຳລັບຜູ້ສົ່ງຜ່ານ (ໃໝ່)**

ຄັ້ງທີ 1 ໃນກໍລະນີຈໍລະຈອນຈຳໜ່າຍຜະລິດຕະພັນເຄື່ອງສຳອາງທີ່ສົ່ງຜ່ານໃນ ສປປ ລາວ ຈະຖືກສຶກສາອົບຮົມ, ກ່າວເຕືອນ, ເຮັດບົດບັນທຶກ, ຂຽນຄຳປະຕິຍານ ພ້ອມທັງອາຍັດ ແລະ ຮຽກເກັບຄືນຜະລິດຕະພັນທີ່ໄດ້ຈໍລະຈອນຈຳໜ່າຍໄປກ່ອນໜ້ານີ້ ພ້ອມທັງຮັບຜິດຊອບຄ່າທຳລາຍຜະລິດຕະພັນເຄື່ອງສຳອາງ;

ຄັ້ງທີ 2 ໃນກໍລະນີຈໍລະຈອນຈຳໜ່າຍຜະລິດຕະພັນເຄື່ອງສຳອາງທີ່ສົ່ງຜ່ານໃນ ສປປ ລາວ ຈະຖືກເຮັດບົດບັນທຶກ, ຍຶດສິນຄ້າ ແລະ ຮຽກເກັບຄືນຜະລິດຕະພັນທີ່ໄດ້ຈໍລະຈອນຈຳໜ່າຍໄປກ່ອນໜ້ານີ້ ພ້ອມທັງ ປັບໄໝ 01 ເທົ່າຕົວ ຂອງມູນຄ່າສິນຄ້ານຳເຂົ້າທັງໝົດ ແລະ ຮັບຜິດຊອບຄ່າທຳລາຍຜະລິດຕະພັນເຄື່ອງສຳອາງ;

ຄັ້ງທີ 3 ໃນກໍລະນີຈໍລະຈອນຈໍາໜ່າຍຜະລິດຕະພັນເຄື່ອງສໍາອາງທີ່ສົ່ງຜ່ານໃນ ສປປ ລາວ ຈະຖືກເຮັດບົດບັນທຶກ, ຍຶດສິນຄ້າ ແລະ ຮຽກເກັບຄືນຜະລິດຕະພັນທີ່ໄດ້ຈໍລະຈອນຈໍາໜ່າຍໄປກ່ອນໜ້ານີ້ ພ້ອມທັງ ປັບໃໝ 02 ເທົ່າຕົວ ຂອງມູນຄ່າສິນຄ້ານໍາເຂົ້າທັງໝົດ ແລະ ຮັບຜິດຊອບຄ່າທໍາລາຍຜະລິດຕະພັນເຄື່ອງສໍາອາງ.

**ລະເມີດຂໍ້ຫ້າມ ມາດຕາ 73 ຂໍ້ຫ້າມສໍາລັບຜູ້ຈໍາໜ່າຍ ແລະ ໃຫ້ບໍລິການເສີມຄວາມງາມ (ໃໝ່)**

ຄັ້ງທີ 1 ສຶກສາອົບຮົມ, ກ່າວເຕືອນ, ເຮັດບົດບັນທຶກ ແລະ ຂຽນຄໍາປະຕິຍານ ພ້ອມທັງຍຶດຜະລິດຕະພັນ ແລະ ຮັບຜິດຊອບຄ່າທໍາລາຍຜະລິດຕະພັນເຄື່ອງສໍາອາງ;

ຄັ້ງທີ 2 ສຶກສາອົບຮົມ, ກ່າວເຕືອນ ແລະ ເຮັດບົດບັນທຶກ ພ້ອມທັງຍຶດຜະລິດຕະພັນ ແລະ ປັບໃໝ 01 ເທົ່າຕົວ ຂອງມູນຄ່າສິນຄ້າທີ່ກວດພົບຕາມລາຄາຂາຍທ້ອງຕະຫຼາດ ແລະ ຮັບຜິດຊອບຄ່າທໍາລາຍຜະລິດຕະພັນເຄື່ອງສໍາອາງ;

ຄັ້ງທີ 3 ເຮັດບົດບັນທຶກ ພ້ອມທັງຍຶດຜະລິດຕະພັນ ແລະ ປັບໃໝ 02 ເທົ່າຕົວ ຂອງມູນຄ່າສິນຄ້າທີ່ກວດພົບຕາມລາຄາຂາຍທ້ອງຕະຫຼາດ ແລະ ຮັບຜິດຊອບຄ່າທໍາລາຍຜະລິດຕະພັນເຄື່ອງສໍາອາງ.

**ມາດຕາ 77 ມາດຕະການໂທດເພີ່ມ (ໃໝ່)**

ນອກຈາກໂທດຕົ້ນຕໍ ທີ່ໄດ້ກໍານົດໄວ້ໃນຂໍ້ຕົກລົງສະບັບນີ້ແລ້ວ ຜູ້ກະທໍາຜິດ ອາດຈະຖືກປະຕິບັດມາດຕະການໂທດເພີ່ມ ເຊັ່ນ: ການໂຈະ ຫຼື ຖອນໃບອະນຸຍາດທາງວິຊາການ ແລະ ໃບຢັ້ງຢືນການຈົດແຈ້ງຜະລິດຕະພັນເຄື່ອງສໍາອາງ ແລະ ເອກະສານອື່ນ ທີ່ກ່ຽວຂ້ອງ.

## ພາກທີ XVI
## ບົດບັນຍັດ ສຸດທ້າຍ

**ມາດຕາ 78 ການຈັດຕັ້ງປະຕິບັດ (ເກົ່າ)**

1. ມອບໃຫ້ກົມອາຫານ ແລະ ຢາ ເປັນເຈົ້າການຮັບຜິດຊອບ ການຈັດຕັ້ງປະຕິບັດ ຂໍ້ຕົກລົງສະບັບນີ້ ຢ່າງເຂັ້ມງວດ.
2. ທຸກອົງການຈັດຕັ້ງທີ່ກ່ຽວຂ້ອງທັງພາກລັດ ແລະ ເອກະຊົນ ຈົ່ງໃຫ້ຄວາມຮ່ວມມື ແລະ ພ້ອມກັນຈັດຕັ້ງປະຕິບັດເປັນຢ່າງດີ.

**ມາດຕາ 79 ຜົນສັກສິດ (ໃໝ່)**

ຂໍ້ຕົກລົງສະບັບນີ້ ມີຜົນສັກສິດ ພາຍຫຼັງ 60 ວັນ ນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ.

ລັດຖະມົນຕີ

ປອ.ດຣ. ບຸນແຝງ ພູມມະໄລສິດ